ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---==00000==---

ກະຊວງກະສິກຳ ແລະ ປ່າໄມ້

ເອກະສານປະກອບການຮຽນການສອນ ວິຊາ

# ໄມ້ດອກໄມ້ປະດັບ

# Ornamental Plants

ຫຼັກສູດສຳລັບໂຮງຮຽນ ກະສິກຳ ແລະ ປ່າໄມ້ ຊັ້ນກາງ

ກະຊວງກະສິກຳ ແລະ ປ່າໄມ້

CIDSE

ສະໜັບສະໜູນໂດຍອົງການຮ່ວມມືສາກົນເພື່ອການພັດທະນາ ແລະ ສາມັກຄີ

ທີ່ປຶກສາດ້ານວິຊາການໂດຍ: ສະຖາບັນເທັກໂນໂລຢີລາຊມົງຄົນ ກາລະສິນ

# ສາລະບານ


| | | ໜ້າ |
|---|---|---|
| **ສາລະບານ** | | A |
| **ບົດທິດສະດີທີ 1.** | ຄວາມສຳຄັນຂອງໄມ້ດອກ-ໄມ້ປະດັບ | 1 |
| 1.1 | ຄວາມສຳຄັນຂອງໄມ້ດອກ-ໄມ້ປະດັບ | 1 |
| 1.2 | ຄວາມໝາຍຂອງ ໄມ້ດອກ-ໄມ້ປະດັບ | 1 |
| 1.3 | ປະໂຫຍດຂອງໄມ້ດອກ-ໄມ້ປະດັບ | 2 |
| **ບົດທິດສະດີທີ 2.** | ປະເພດ ແລະ ຊະນິດໄມ້ດອກ-ໄມ້ປະດັບ | 4 |
| 2.1 | ອະທິບາຍປະເພດຂອງໄມ້ດອກ-ໄມ້ປະດັບ | 4 |
| 2.2 | ອະທິບາຍຊະນິດຂອງ ໄມ້ດອກ-ໄມ້ປະດັບ | 6 |
| 2.3 | ອະທິບາຍປະເພດ ໄມ້ຢືນຕົ້ນ | 7 |
| **ບົດທິດສະດີທີ 3.** | ປັດໃຈ ແລະ ສະພາບແວດລ້ອມທີ່ມີອິດທິພົນ ຕໍ່ການຈະເລີນເຕີບໂຕຂອງໄມ້ດອກ-ໄມ້ປະດັບ | 8 |
| 3.1 | ດິນ | 8 |
| 3.2 | ແສງສະຫວ່າງ | 9 |
| 3.3 | ອຸນຫະພູມ | 11 |
| 3.4 | ຄວາມຊຸ່ມ | 11 |
| 3.5 | ແຮ່ທາດອາຫານ | 12 |
| 3.6 | ນ້ຳ ແລະ ການນຳໃຊ້ນ້ຳ | 12 |
| **ບົດທິດສະດີທີ 4.** | ໂຮງເຮືອນ,ພາສະນະ ແລະ ວັດຖຸປູກ | 14 |
| 4.1 | ເຮືອນກ້າເບ້ຍ | 14 |
| 4.2 | ວັດຖຸປູກ | 16 |
| **ບົດທິດສະດີທີ 5.** | ການຂະຫຍາຍພັນໄມ້ດອກ-ໄມ້ປະດັບ | 19 |
| 5.1 | ການຂະຫຍາຍພັນໄມ້ດອກ-ໄມ້ປະດັບ | 19 |
| 5.2 | ການຂະຫຍາຍພັນໄມ້ໃບ -ໄມ້ປະດັບ | 19 |

# ສາລະບານ ( ຕໍ່ )


| | | |
|---|---|---|
| **ບົດທີດສະດີທີ 6.** | ການປູກໄມ້ດອກ-ໄມ້ປະດັບບາງຊະນິດ | 22 |
| 6.1 | ການປູກກຸຫລາບ | 22 |
| 6.2 | ການປູກ | 25 |
| 6.3 | ການປູກໄມ້ປະດັບ | 26 |
| **ບົດທີດສະດີທີ 7.** | ສັດຕູ ຂອງ ໄມ້ດອກ-ໄມ້ປະດັບ ແລະ ການປ້ອງກັນກຳຈັດ | 28 |
| 7.1 | ພະຍາດ ແລະ ແມງໄມ້ສັດຕູ ຂອງ ໄມ້ດອກ-ໄມ້ປະດັບ | 28 |
| 7.2 | ການປ້ອງກັນກຳຈັດພະຍາດ ແລະ ແມງໄມ້ ຂອງ ໄມ້ດອກ-ໄມ້ປະດັບ | 29 |
| 7.3 | ແມງໄມ້ ພວກດູດກິນ | 29 |
| **ເອກະສານອ້າງອີງ** | | 31 |

**ກະຊວງກະສິກຳ ແລະ ປ່າໄມ້**

ເອກະສານປະກອບການຮຽນ ການສອນ ວິຊາ

# ໄມ້ດອກໄມ້ປະດັບ

# Ornamental Plants

**ຫຼັກສູດສຳລັບໂຮງຮຽນ ກະສິກຳ ແລະ ປ່າໄມ້ ຊັ້ນກາງ**

**ກະຊວງກະສິກຳ ແລະ ປ່າໄມ້**

ສະໜັບສະໜູນໂດຍອົງການຮ່ວມມືສາກົນເພື່ອການພັດທະນາ ແລະ ສາມັກຄີ
ທີ່ປຶກສາດ້ານວິຊາການໂດຍ: ສະຖາບັນເທັກໂນໂລຢີລາຊະມົງຄົນ ກາລະສິນ

# ບົດທົດສະດີທີ 1
# ຄວາມສຳຄັນຂອງໄມ້ດອກ-ໄມ້ປະດັບ

**ຈຸດປະສົງການສອນ**

1. ບອກຄວາມສຳຄັນຂອງໄມ້ດອກ-ໄມ້ປະດັບ
2. ບອກຄວາມໝາຍຂອງໄມ້ດອກ-ໄມ້ປະດັບ
3. ບອກປະໂຫຍດທີ່ໄດ້ຈາກການປູກໄມ້ດອກ-ໄມ້ປະດັບ

## ເນື້ອໃນ

### 1.1 ຄວາມສຳຄັນຂອງໄມ້ດອກ-ໄມ້ປະດັບ

ໄມ້ດອກ-ໄມ້ປະດັບ ກໍມີຄວາມສຳຄັນໃນການໃຫ້ຮົ່ມເງົາ ແລະ ອື່ນໆ ຈະເຫັນໄດ້ວ່າ ໃນປະເທດຕ່າງໆ ກໍ່ຍອມຮັບວ່າພືດເຫລົ່ານີ້ມີຄວາມສຳຄັນແທ້ ເພາະມັນຊ່ວຍເປັນອາຫານຕາພັກ ຜ່ອນຢ່ອນໃຈ ຈົນເຖິງຂັ້ນຍອມລົງທຶນຈຳນວນມະຫາສານໃນການສ້າງສວນສາທາລະນະ ປູກໄມ້ ດອກ-ໄມ້ປະດັບນາໆຊະນິດໃຫ້ຄົນໄດ້ເບິ່ງໄດ້ຊົມ. ບ້ານເຮົາດິນຟ້າອາກາດທີ່ເໝາະສົມແກ່ການປູກ ໄມ້ດອກ-ໄມ້ປະດັບຫລາຍໆຊະນິດ.

#### 1.1.1 ຄວາມສຳຄັນຕໍ່ສັງຄົມ

ຍ່ອມເປັນທີ່ຮູ້ກັນແລ້ວວ່າໃນປະຈຸບັນໄມ້ດອກ-ໄມ້ປະດັບມີຄວາມຈຳເປັນແກ່ສັງຄົມປະຈຸບັນ ມະນຸດມີຄວາມຈະເລີນຫລາຍຂຶ້ນທາງດ້ານວັດຖຸ ແລະ ວັດທະນະທຳການຮັກ ຄວາມສວຍງາມກໍ່ຍິ່ງເພີ່ມທະວີຂຶ້ນ ເມື່ອປະຊາຊົນເພີ່ມຂຶ້ນ ຄວາມຈຳເປັນທີ່ຕ້ອງການໃຊ້ຂອງ ຕ່າງໆ ເພື່ອປະກອບການດຳລົງຊີວິດຂອງຕົນໃຫ້ໄດ້ດີກໍ່ມີເພີ່ມຂຶ້ນອີກດ້ວຍ.

#### 1.1.2 ຄວາມສຳຄັນທາງດ້ານການຄ້າ

ໃນການຜະລິດໄມ້ດອກ-ໄມ້ປະດັບເພື່ອການຄ້ານັ້ນ ນັບມື້ຈະມີຄວາມສຳຄັນທາງດ້ານເສດຖະກິດຂອງປະເທດເຮົາຫລາຍຂຶ້ນ ເພາະເປັນສິ່ງທີ່ມະນຸດຕ້ອງໄດ້ໃຊ້ເກືອບທຸກຄົນທຸກໆປະເທດໃນທົ່ວໂລກຕະຫລອດການຄ້າໄມ້ດອກ-ໄມ້ປະດັບນັບມື້ຈະຂະຫຍາຍຕົວກ້ວາງຂວາງອອກ ແລະ ມີປະລິມານຫລາຍຂຶ້ນ ໃຫ້ທັນກັບຄວາມຕ້ອງການຂອງສັງຄົມ ຈຶ່ງເປັນທີ່ເຊື່ອໄດ້ວ່າ ໃນອະນາຄົດຂອງການປູກໄມ້ດອກ-ໄມ້ປະດັບນັ້ນຈະກ້າວໄປສູ່ເຖິງວິທີການຜະລິດເໝືອນກັບການຜະລິດທາງດ້ານກະສິກຳ ໃນຂະແໜງອື່ນໆ ໄດ້ເໝືອນກັນ.

### 1.2 ຄວາມໝາຍຂອງໄມ້ດອກ-ໄມ້ປະດັບ

ໝາຍເຖິງພັນໄມ້ດອກ -ໄມ້ປະດັບ ຫລື ໄມ້ໃບ ຊຶ່ງມີຄວາມມຸ້ງໝາຍຕ້ອງການພັນໄມ້

ດອກ-ໃບໄມ້ ຫລື ສິ່ງທີ່ກ່ຽວພັນກັບດອກ-ໄມ້ປະດັບທຸກຊະນິດ.

**1.2.1 ຄວາມໝາຍຂອງໄມ້ດອກ**

ໝາຍເຖິງການປູກໄມ້ດອກເພື່ອຕັດດອກ ຫລື ເບິ່ງຄວາມງາມຂອງດອກຢູ່ໃນຕົ້ນ ເຊັ່ນ: ດາວເຮືອງ ເບັນຈາມາດ ເຍີບີລາ.

**1.2.2 ຄວາມໝາຍຂອງໄມ້ປະດັບ**

ໝາຍເຖິງພັນໄມ້ປະດັບ ເຊິ່ງສ່ວນຫລາຍເປັນໄມ້ໃບ ແລະ ໄມ້ກະຖັງ. ການປູກໄມ້ໃບ ຫລື ໄມ້ປະດັບປະເພດນີ້ ແມ່ນຈະເບິ່ງຄວາມສວຍງາມ ຂອງ ຮູບຊົງ ແລະ ໃບ ເຊັ່ນ: ໂກສິນ, ດອກເຈ້ຍ ແລະ ຫາງຍູງ.

## 1.3 ປະໂຫຍດຂອງໄມ້ດອກ-ໄມ້ປະດັບ

ປະໂຫຍດຂອງໄມ້ດອກໄມ້ປະດັບມີຫລາຍຢ່າງນອກຈາກເປັນສິ່ງທີ່ສວຍງາມປະດັບເອ້ໃຫ້ແກ່ສັງຄົມ ຫລືຮັບໃຊ້ສັງຄົມເປັນຕົ້ນແມ່ນໃຊ້ໃນວຽກຕ່າງໆເປັນຕົ້ນແມ່ນບຸນທາງພຸດທະສາດສະໜາ ແລະ ເຮັດໃຫ້ເປັນທີ່ພັກຜ່ອນຢ່ອນໃຈ ເຊັ່ນ:

1. ໃຫ້ເກີດຄວາມເພີດເພີນທາງຈິດໃຈແກ່ມະນຸດ
2. ການໃຊ້ເວລາຫ່ວາງໃຫ້ເກີດປະໂຫຍດ
3. ຢຶດຖືເປັນອາຊີບໄດ້.

**1.3.1 ເກີດຄວາມເພີດເພີນທາງຈິດໃຈແກ່ມະນຸດ**

ມີຄວາມສຳຄັນ ແລະ ຈຳເປັນຕໍ່ການດຳລົງຊີວິດຂອງມະນຸດແລ້ວ ມະນຸດທຸກຄົນໂດຍສະພາບພື້ນຖານຂອງຈິດໃຈຍ່ອມຕ້ອງການພົບ ເຫັນສິ່ງທີ່ສວຍງາມຕາມທຳມະຊາດຂອງໄມ້ດອກ-ໄມ້ປະດັບ. ເມື່ອນຳມາປູກປະດັບສະຖານທີ່ຕ່າງໆ ກໍ່ຈະເພີ່ມຄວາມສວຍງາມໃຫ້ສະຖານທີ່ນັ້ນໆ.ເຮັດໃຫ້ເກີດຄວາມສຸກຄວາມຈະເລີນຕາຈະເລີນໃຈແກ່ເຈົ້າຂອງ ແລະ ຜູ້ມາພົບເຫັນອີກດ້ວຍ.

**1.3.2 ເວລາຫວ່າງໃຫ້ເກີດປະໂຫຍດ**

ການປູກໄມ້ດອກ-ໄມ້ປະດັບກໍ່ແມ່ນກິດຈະກຳໜຶ່ງທີ່ມະນຸດເຮົາໃຊ້ເວລາຫວ່າງໃຫ້ເກີດປະໂຫຍດ ໂດຍສະເພາະ ພວກເຮົາ ອາດໃຊ້ເວລາຫວ່າງ ມາປະດັບປະດາບ້ານ ເຮືອນໃຫ້ງາມແລ້ວ ເຮົາອາດຈະໃຊ້ເວລານັ້ນ ຕັດແຕ່ງຕົ້ນໄມ້ , ຂະຫຍາຍ ພັນໄມ້ດອກ-ໄມ້ປະດັບ ບົວລະບັດຮັກສາເຊິ່ງເປັນກິດຈະກຳໜຶ່ງທີ່ເຮັດ ໃຫ້ຫລຸດຜ່ອນຄວາມຕຶງຄຽດໃນສະໝອງ

**1.3.3 ການຢຶດຖືເປັນອາຊີບໄດ້**

ການປູກໄມ້ດອກ-ໄມ້ປະດັບ ນອກເໜືອຈະພາໃຫ້ເກີດຄວາມເພີດເພີນ, ຄວາມສວຍງາມ ຫລືເປັນອາຫານຈົນກະທັ້ງເປັນຢາປິ່ນປົວແລ້ວ ປະຈຸບັນການປູກໄມ້ດອກ-ໄມ້ປະດັບສາມາດເຮັດເປັນອາຊີບຫລັກ ຫລື ອາຊີບສຳຮອງເພື່ອເພີ່ມລາຍຮັບໃຫ້ແກ່ຄອບຄົວ ໃນແຜນພັດ

ທະນາເສດຖະກິດ ແລະ ສັງຄົມ ໄມ້ດອກໄມ້ປະດັບເປັນພືດຊະນິດໜຶ່ງ ທີ່ຖືກກຳນົດໃຫ້ ເປັນພືດທີ່ໄດ້ຮັບການສົ່ງອອກສ່ວນໃຫຍ່ ຄື ກ້ວຍໄມ້ ນັບທັງໃນຮູບຂອງຕົ້ນ ແລະ ດອກ ສ່ວນໄມ້ດອກ-ໄມ້ປະດັບ ສົ່ງອອກໃນຮູບໄມ້ກະຖັງ, ກິ່ງຊຳ ແລະ ທ່ອນພັນ ເຊິ່ງໄມ້ປະດັບ ທີ່ສົ່ງອອກໄດ້ແກ່ ໂກສົນ ແລະ ອື່ນໆ.

# ບົດທີດສະດີທີ 2
# ປະເພດ ແລະ ຊະນິດໄມ້ດອກ-ໄມ້ປະດັບ

**ຈຸດປະສົງການສອນ**

1. ອະທິບາຍປະເພດໄມ້ດອກ-ໄມ້ປະດັບ
2. ອະທິບາຍຊະນິດໄມ້ດອກ-ໄມ້ປະດັບ

## ເນື້ອໃນ

## 2.1 ອະທິບາຍປະເພດຂອງໄມ້ດອກ-ໄມ້ປະດັບ

ການຈຳແນກປະເພດໄມ້ດອກ-ໄມ້ປະດັບນັ້ນມີຄວາມຈຳເປັນຫລາຍ ແລະ ສຳຄັນຕ້ອງພິຈາລະນາໃຫ້ຖືກຕ້ອງ. ການເອີ້ນຊື່ພັນໄມ້ນັ້ນແມ່ນບົ່ງບອກປະເພດພັນໄມ້ ແລະ ສາມາດບອກໄດ້ລັກສະນະພັນໄມ້ຕ່າງໆ ເຊັ່ນ: ເມື່ອເວົ້າເຖິງໄມ້ຕັດດອກກໍ່ເຂົ້າໃຈວ່າ ພັນໄມ້ດອກນັ້ນປູກໄວ້ເພື່ອຕັດດອກມາໃຊ້ ຫລືຕັດດອກຈຳໜ່າຍ ເຊິ່ງຕ່າງກັບພັນໄມ້ຊະນິດອື່ນໆທີ່ປູກໄວ້ເບິ່ງດອກຢູ່ຕົ້ນ ຖ້າຈະຕັດດອກມາໃຊ້ ຫລືຈຳໜ່າຍແມ່ນຈະບໍ່ໄດ້ປະໂຫຍດຄຸ້ມຄ່າ ເນື່ອງຈາກວ່າ ລັກສະນະຄຸນສົມບັດຂອງພັນໄມ້ນັ້ນໆ ບໍ່ເໝາະທີ່ຈະຕັດດອກມາຈາກຕົ້ນ ເຊັ່ນອາດມີກ້ານດອກສັ້ນເກີນໄປ ຫລືດອກນັ້ນບໍ່ທົນທານ ຖ້າຈະຕັດອອກມາຈາກຕົ້ນຄວາມງາມຂອງດອກທີ່ຢູ່ຕົ້ນຫລາຍກ່ວາຄວາມງາມທີ່ຈະຕັດດອກອອກມາປະດັບຕົກແຕ່ງທີ່ອື່ນໆ ພັນໄມ້ດອກໄມ້ປະດັບສາມາດຈຳແນກໄດ້ຄືດັ່ງລຸ່ມນີ້:

### 2.1.1 ປະເພດໄມ້ດອກ

ໝາຍເຖິງການປູກໄມ້ດອກເພື່ອຕັດດອກອອກຈຳໜ່າຍເປັນການຄ້າແຕ່ຢ່າງດຽວເທົ່ານັ້ນ ລັກສະນະພັນໄມ້ດອກທີ່ດີຕ້ອງມີຄວາມງາມສະດຸດຕາປະທັບໃຈ ເມື່ອຕັດດອກອອກຈາກຕົ້ນບໍ່ແຫ່ວງ່າຍ, ມີຄວາມທົນທານ ແລະ ມີອາຍຸຍືນ. ການເຮັດສວນປະເພດນີ້ຈະມີພັນໄມ້ດອກຫລາຍຊະນິດ ທີ່ຕັດດອກສະຫລັບກັນໄປຕາມລະດູການ ຫລື ແລ້ວແຕ່ເຈົ້າຂອງສວນຈະເພາະພັນພັນໄມ້ດອກໄດ້ຫລາຍຫລືໜ້ອຍ ໄມ້ໃຫ້ດອກທົ່ວໆໄປທີ່ປູກເປັນການຄ້າ ກໍ່ຄື: ກຸຫລາບ, ເຢັປີລາ, ເບັນຈາມາດ, ຊ່ອນກິ່ນ, ດາວເຮືອງ, ດາວກະຈາຍ, ດອກສາມປີບໍ່ແຫ່ວ, ຫອນໄກ່ ແລະ ອື່ນໆ.

### 2.1.2 ປະເພດໄມ້ໃບ

ໝາຍເຖິງໄມ້ປະດັບ ເຊິ່ງສ່ວນຫລາຍເປັນໄມ້ພວກໃບ ແລະ ເປັນໄມ້ທີ່ປູກໃນໂຖການເຮັດສວນໄມ້ປະດັບ ຫລືໄມ້ໃບປະເພດນີ້ ມັນຕ້ອງມີເຮືອນປຸກເພື່ອເພາະພັນໄມ້ ແລະ ໃນເວລາດຽວກັນກໍ່ຕ້ອງການເຮືອນປູກ ເພື່ອເພາະຊຳເບ້ຍໄມ້ອ່ອນ ທີ່ເກີດຈາກການຂະຫຍາຍພັນ

ເພື່ອທະວີຈຳນວນພັນໄມ້, ພັນໄມ້ທີ່ຂະຫຍາຍພັນເປັນຕົ້ນໃໝ່ຂຶ້ນນັ້ນກໍ່ຕ້ອງການດູແລເອົາໃຈໃສ່ຢ່າງໃກ້ຊິດ ແລະ ຕ້ອງການສິ່ງແວດລ້ອມທີ່ເໝາະສົມ. ສ່ວນຫລາຍໄມ້ໃບຕ້ອງການບ່ອນມີແສງພໍປະມານ ຫລື ຮົ່ມ ເຊັ່ນ: ສາວນ້ອຍປະແປງ ນອກຈາກນີ້ ກຸຫລາບບາງຊະນິດເປັນໄມ້ຕັດດອກທີ່ນິຍົມກັນມາຕັ້ງແຕ່ດົນນານເພາະມີດອກຈູມ ຫລື ດອກທີ່ພວມບານບາງຊະນິດສາມາດແຍ້ມບານໄດ້ດົນ ພັນທີ່ບານໄດ້ງ່າຍນັ້ນບໍ່ນິຍົມເປັນໄມ້ຕັດດອກ ເພາະຈະເຮັດໃຫ້ດອກແຫ່ວໄດ້ງ່າຍ.

### 2.1.3 ອະທິບາຍປະເພດໄມ້ດອກ.

ໝາຍເຖິງພັນໄມ້ທີ່ຕ້ອງການຊົມຄວາມງາມຂອງດອກທີ່ຕິດຢູ່ກັບຕົ້ນຫລາຍກ່ວາການຕັດດອກອອກຈາກຕົ້ນ ຄືໄມ້ຕັດດອກທີ່ກ່າວມາແລ້ວ ໄມ້ດອກປະເພດນີ້ມີດອກທີ່ບອບບາງມີລັກສະນະຄຸນສົມບັດບໍ່ເໝາະສົມທີ່ຈະເຮັດເປັນໄມ້ຕັດດອກ ຫລືຕັດດອກອອກມາຈາກຕົ້ນເພາະມີກ້ານດອກສັ້ນ ກີບບາງ ຖ້າຕັດດອກອອກຈາກຕົ້ນ ກໍ່ບໍ່ຢູ່ໃນສະພາບເດີມໄດ້ດົນເໝືອນກັບຢູ່ຕົ້ນຂອງມັນ ເຊັ່ນ: ດອກເຈ້ຍ, ສະບາ, ດອກເຂັມ, ກາລະກັບ, ພິທູເນຍ ແລະ ອື່ນໆ. ດອກໄມ້ເຫລົ່ານີ້ກໍ່ເປັນດອກໄມ້ຊະນິດໜຶ່ງ ທີ່ມີຄວາມສາມາດຈັດເປັນດອກໄມ້ຕັດດອກ ນອກຈາກນີ້ໃຊ້ປູກໃນແປງເປັນພຸ່ມເພື່ອໃຫ້ດອກຢູ່ກັບຕົ້ນເຊັ່ນ ດອກໄມ້ອື່ນໆ ທີ່ປູກເພື່ອຕ້ອງການຊົມຄວາມງາມຂອງດອກຢູ່ຕົ້ນ.

### 2.1.4 ພັນໄມ້ປະດັບປະເພດໄມ້ໃບ

ໝາຍເຖິງພັນໄມ້ທີ່ມີຄວາມມຸ້ງໝາຍ ແລະ ຕ້ອງການໃຊ້ພັນໄມ້ເຫລົ່ານີ້ເປັນເຄື່ອງປະດັບອາຄານສະຖານທີ່ຕ່າງໆ ໂດຍບໍ່ຕ້ອງຄຳນຶງເຖິງດອກຂອງມັນ ແຕ່ຄຳນຶງເຖິງຮູບຮ່າງຄວາມສວຍງາມ ລຳຕົ້ນ ແລະ ໃບເປັນສິ່ງສຳຄັນ ເຊິ່ງບາງຊະນິດອາດບໍ່ເຄີຍມີດອກເລີຍກໍ່ໄດ້ ແຕ່ໃບຂອງມັນ ຮູບຮ່າງຂອງລຳຕົ້ນງາມໜ້າເບິ່ງ ແລະ ມີຮູບຊົງທີ່ໄດ້ດົນຊຶ່ງອາດແບ່ງອອກດັ່ງນີ້:

1. ໃບ: ພັນໄມ້ທີ່ມີຮູບຮ່າງລັກສະນະຂອງໃບສວຍງາມ ມີສີສັນຮູບຮ່າງຕາມຄວາມຕ້ອງການ ແລະ ມີຄວາມມຸ້ງໝາຍທີ່ຈະໃຊ້ຄວາມງາມຂອງໃບເປັນສຳຄັນ ເຊັ່ນ: ໂກສົນ ແລະ ບອນບາງຊະນິດ.

2. ບອນ : ເປັນໄມ້ໃບທີ່ຄົນນິຍົມປູກມາດົນ ເພາະຄວາມງາມພິດສະດານຂອງໃບມີຫລາຍຊະນິດ ການບົວລະບັດຮັກສາງ່າຍ ແຕ່ມີຂໍ້ເສຍຢູ່ທີ່ວ່າ : ບ່ອນມີໄລຍະພັກຕົວ ເມື່ອເຖິງໄລຍະພັກຕົວ ໃບຈະບໍ່ມີ ຈະມີແຕ່ຫົວ ແລະ ໜໍ່ໃນດິນເທົ່ານັ້ນ.

3. ເຟີນຣ: ເປັນໄມ້ຊະນິດນຶ່ງ ທີ່ມີຄວາມງາມ ໃນຮູບຮ່າງລັກສະນະ ເໝືອນກັນກັບບອນ ຕະຫລາດດອກໄມ້ຕ້ອງການຫລາຍ ເພາະໃບເຟີນຣ ໃຊ້ຮ່ວມກັບດອກໄມ້ອື່ນໆ ໃນການຈັດດອກໄມ້ ກ້ານດອກຍາວພໍທີ່ຈະຈັດດອກໄດ້ດີມີຄວາມທົນບໍ່ແຫ່ວແຫ້ງງ່າຍ ການປູກດູແລຮັກສາງ່າຍ ເຟີນມັກທີ່ຊຸ່ມຊື່ນ ແລະ ຂະຫຍາຍພັນໄດ້ໄວ ຊາວສວນທີ່ມັກປູກໄມ້ດອກ-ໄມ້ປະດັບມັກຈະປູກເຟີນຣເພື່ອຕັດໃບຂາຍຮ່ວມກັບດອກໄມ້ອີກດ້ວຍ.

4. ປຣົກ : ເປັນໄມ້ໃບອີກຊະນິດໜຶ່ງ ທີ່ຢູ່ໃນຄວາມນິຍົມເຊັ່ນດຽວ ກັບເຟຣິນ ສ່ວນຫລາຍປູກລົງໃນໜານ ເພື່ອຕັດໃບຂາຍ, ໃບສີຂຽວສວຍງາມ, ໂດຍສະເພາະໃຊ້ຈັດດອກໄມ້

ການດູແລຮັກສາງ່າຍ ແລະ ການຂະຫຍາຍພັນກໍ່ງ່າຍ ອາດຈະແຍກ ຫລືໃຊ້ເມັດປູກກໍ່ໄດ້. ໃນປະຈຸບັນນີ້ປຣິກການຍາວ ຫລື ປຣິກກ້ານເຊິ່ງ ມີຄວາມນິຍົມຫລາຍກ່ວາປຣິກກ້ານອ່ອນ.

5. ໂກສິນ: ກໍ່ເປັນໄມ້ໃບທີ່ມີຄວາມງາມໃນເລື່ອງຮູບຮ່າງລັກສະນະ ແລະ ສີສັນແຕກຕ່າງກັນເຊັ່ນດຽວກັບບອນ ແລະ ນິຍົມປູກມາດົນຄືກັນກັບບອນ ແລ້ວແຕ່ການໃຊ້ໃບໂກສິນ ຈັດດອກໄມ້ນັ້ນມີນ້ອຍກ່ວາເຟີນຣ ແລະ ປຣິກ. ນອກຈາກນີ້ຍັງມີໄມ້ອີກຫລາຍຊະນິດທີ່ໃຊ້ປູກເພື່ອປະດັບໂດຍເບິ່ງຄວາມງາມຂອງໃບ ແຕ່ບໍ່ຄ່ອຍນິຍົມຕັດໃບມາຈັດດອກໄມ້ເຊັ່ນທີ່ກ່າວມານອກຈາກນີ້ຍັງມີໝາກຜູ້ໝາກແມ່ ແລະ ອື່ນໆ.

6. ໄມ້ໃນໂຖ: ໝາຍເຖິງພັນໄມ້ໃຫ້ດອກ ແລະ ພັນໄມ້ໃຫ້ໃບກໍໄດ້ ຫລື ພັນໄມ້ໃຫ້ໝາກ ທີ່ມີຮູບຮ່າງລັກສະນະຂອງຕົ້ນໃຫ້ດອກ, ໃຫ້ໃບທີ່ ງົດງາມເມື່ອຢູ່ໃນໂຖປູກ. ມີພັນໄມ້ຫລາຍຊະນິດທີ່ຂຶ້ນຢູ່ກັບພື້ນດິນ ທີ່ເບິ່ງແລ້ວກໍ່ບໍ່ງາມປານໃດ ແຕ່ເມື່ອຂຸດນຳມາປູກໃສ່ໂຖ ປູກແລ້ວກັບເກີດຄວາມງາມ ແລະ ເພີ່ມຄຸນຄ່າຂຶ້ນມາອີກດ້ວຍ.

ການປູກໄມ້ໃນໂຖນັ້ນ ສ່ວນໃຫ່ຍເປັນພັນໄມ້ທີ່ມີຄວາມອ່ອນແອ ແລະ ຕ້ອງການຄວາມເອົາໃຈໃສ່ບົວລະບັດຮັກສາຢ່າງໃກ້ຊິດ ແລະ ພວກພັນໄມ້ດັ່ງກ່າວກໍ່ມີຄວາມໝາຍ ອີກ ຄື: ຕ້ອງການໃຊ້ໂຖເພື່ອເຄື່ອນທີ່, ໃຊ້ປະດັບຕຶກແຕ່ງອາຄານ ເຊິ່ງເຄື່ອນຍ້າຍໄດ້ງ່າຍ.ການປູກໄມ້ໃສ່ໂຖນິຍົມກັນປູກຫລາຍໃນກຸ່ມທີ່ຕ້ອງການພັນໄມ້ເພື່ອໃຊ້ປະດັບອາຄານ ທັງພາຍນອກ ແລະ ພາຍໃນ ເພາະສາມາດປ່ຽນແປງ ແລະ ເຄື່ອນຍ້າຍໄດ້ສະເໝີ ເຊິ່ງແຕກຕ່າງກັບພວກທີ່ປູກໃນດິນຕາມທຳມະຊາດ ເຊັ່ນ: ການປູກຕົ້ນໜ້າງົວກໍ່ນິຍົມກັນປູກໃສ່ໂຖ. ຍັງມີໄມ້ດອກ-ໄມ້ໃບອີກ ເປັນຕົ້ນແມ່ນ ໂກສິນ, ປຣິກ, ເຟີນຣ, ບອນ ແລະ ອື່ນໆ.

## 2.2 ອະທິບາຍຊະນິດຂອງໄມ້ດອກ-ໄມ້ປະດັບ

ປະຈຸບັນການປູກໄມ້ດອກ-ໄມ້ປະດັບ ແມ່ນກຳລັງກ້າວໜ້າແຜ່ອອກໄປສູ່ສະຖານທີ່ຈຳໜ່າຍພັນໄມ້ຫລາຍແຫ່ງ ແຕ່ກ່ອນເຄີຍຈຳໜ່າຍແຕ່ພັນໄມ້ໃຫ້ໝາກ ແຕ່ປະຈຸບັນກໍ່ມີພັນໄມ້ດອກ-ໄມ້ປະດັບ ເພື່ອການຄ້າເກີດຂຶ້ນ. ດັ່ງນັ້ນ ຈຶ່ງມີການປູກໄມ້ດອກ-ໄມ້ປະດັບເພື່ອສົ່ງອອກ ດັ່ງຕໍ່ໄປນີ້:

### 2.2.1 ພັນໄມ້ດອກ

ຄວາມມຸ້ງໝາຍສ່ວນໃຫຍ່ຕ້ອງການດອກ. ດັ່ງນັ້ນ, ໃນການຜະລິດຈຶ່ງຜະລິດໃຫ້ໄດ້ປະລິມານ ແລະ ຄຸນນະພາບທາງດອກສູງຍິ່ງມີລາຄາ ແລະ ຄຸນຄ່າສູງ. ສະນັ້ນ, ພັນໄມ້ດອກຈຶ່ງເປັນພັນໄມ້ທີ່ຕ້ອງ ມີຄຸນສົມບັດທາງດອກເປັນສຳຄັນ ເລື່ອງໃບ ແລະ ລັກສະນະຂອງລຳຕົ້ນນັ້ນບໍ່ມີຄວາມມຸ້ງໝາຍ ແລະ ຄວາມຕ້ອງການໄມ້ດອກກໍ່ຕ້ອງພິຈາລະນາໃນການແບ່ງອີກ ຄື:

1. ໄມ້ຕັດດອກ : ຄືໄມ້ດອກຊະນິດທີ່ປູກໄວ້ເພື່ອຕັດດອກອອກຈາກຕົ້ນມາໃຊ້ຫລືຈຳໜ່າຍ ເຊັ່ນ : ເຍີບີລາ, ເບັນຈາມາດ, ກຸຫລາບ ແລະ ອື່ນໆ.

2. ເຍີບີລາ : ເປັນໄມ້ດອກຊະນິດໜຶ່ງທີ່ນິຍົມກັນປູກມາແຕ່ດົນນານແລ້ວ ເພາະດອກສວຍງາມ ແລະ ມີຄວາມສະໝ່ຳສະເໝີ ແລະ ນິຍົມກັນປູກຢ່າງຫລວງຫລາຍ ມີຮູບຮ່າງສີສັນໃຫ້ເລືອກຫລາຍ ກ້ານດອກຍາວພໍໃຊ້ ມີຄວາມທົນທານ ເປັນດອກທີ່ມີລາຄາປານກາງ ການປູກ ແລະ ບົວລະບັດຮັກສາກໍງ່າຍ.

3. ເບັນຈາມາດ: ເປັນໄມ້ຕັດດອກທີ່ມີລາຄາແພງ ແລະ ນິຍົມກັນໃນທ້ອງຕະຫລາດ ຮູບຂອງດອກມີຄວາມສວຍງາມ ມີກ້ານດອກຍາວ ແລະ ມີຄວາມທົນທານພໍປະມານ ການປູກ ແລະ ບົວລະບັດຮັກສາງ່າຍ, ສາມາດປູກເປັນອາຊີບໄດ້.

4. ໄມ້ດັດ ແລະ ໄມ້ແຄຣະ (Miniature & Bonsai) ເປັນໄມ້ປະດັບອີກຊະນິດນຶ່ງທີ່ມີຄວາມມຸ້ງໝາຍໃນຄວາມງາມຂອງຮູບຮ່າງລັກສະນະຮູບຊົງຂອງຕົ້ນ, ກິ່ງ, ໃບ, ດອກ ແລະ ໝາກ. ໄມ້ດອກ ຫລື ໄມ້ແຄຣະນັ້ນຈະມີຮູບຊົງເກີດຂຶ້ນໄດ້ໂດຍການຕັດຕົກແຕ່ງຂອງເຈົ້າຂອງຜູ້ປູກ ການດູແລເອົາໃຈໃສ່ມີຫລາຍ ໂດຍສະເພາະໄມ້ດັດນັ້ນນິຍົມກັນປູກລົງໃນດິນກໍ່ມີ ແລະ ປູກໃນໂຖກໍ່ມີ. ແຕ່ໄມ້ແຄຣະນັ້ນ ຕ້ອງການປູກໃນໂຖເພື່ອໃຫ້ແຄຣະແກ່ນເປັນສຳຄັນ. ໄມ້ດັດ ຫລື ໄມ້ແຄຣະ ຖືວ່າເປັນໄມ້ປະດັບທີ່ມີຄຸນຄ່າສູງເຕັມໄປດ້ວຍສິລະປະ ແລະ ຄວາມນຶກຄິດ ສະແດງເຖິງສີມືຂອງເຈົ້າຂອຜູ້ປູກ. ການບົວລະບັດຮັກສາມີຫລາຍກ່ວາພວກໄມ້ດອກ-ໄມ້ປະດັບອື່ນໆ. ໄມ້ດັດ ແລະ ໄມ້ແຄຣະ ເປັນໄມ້ທີ່ມີລາຄາສູງ ແລະ ສ່ວນຫລາຍກໍ່ມີອາຍຸຍືນນານ.

## 2.3 ອະທິບາຍປະເພດໄມ້ຢືນຕົ້ນ

ໝາຍເຖິງພັນໄມ້ທີ່ມີອາຍຸນານກ່ວາ 2 ປີ ບາງຊະນິດອອກດອກໃນປີທຳອິດ ແຕ່ ເມື່ອອອກດອກ ອອກໝາກແລ້ວ ກໍ່ຍັງບໍ່ຕາຍ ຍັງມີດອກ ມີໝາກ ຄັ້ງທີສອງ ທີສາມ ທີສີ່ ຕໍ່ໄປເລື້ອຍໆ ຫລື ຫລາຍກ່ວານັ້ນ ພວກນີ້ອາດມີອາຍຸໄດ້ເຖິງຮ້ອຍປີ ແລະ ມີທັງລັກສະນະຕ່າງໆ ຕ່າງກັນ ມີທັງຕົ້ນນ້ອຍ ແລະ ຕົ້ນໃຫ່ຍ.

### 2.3.1 ພັນໄມ້ປະດັບປະເພດຢືນຕົ້ນ

ເປັນພັນໄມ້ປະດັບຊະນິດໜຶ່ງ ທີ່ມີລັກສະນະເປັນໄມ້ຢືນຕົ້ນ, ມີລຳຕົ້ນດຽວ ແຕກກິ່ງກ້ານ ແລະ ແໜງ ແຜ່ສາຂາສ່ວນເທິງ ໃຫ້ຄວາມຮົ່ມເຢັນ ແລະ ສວຍງາມ. ບາງຊະນິດມີດອກດົກ ແລະ ສວຍງາມ. ສ່ວນຫລາຍມີອາຍຸຍືນ ແລະ ມີຮູບຕ່າງກັນ ມີທັງສູງ ແລະ ເຕັ້ຍແຜ່ກະຈາຍ ພວກໄມ້ຕົ້ນທີ່ມີດອກດົກອອກດອກພ້ອມກັນມີ : ຫາງນົກຍູງ, ຕົ້ນຄູນເຫລືອງ ແລະ ອື່ນໆ ນອກຈາກນີ້ ຍັງມີອີກຫລາຍຊະນິດ ເຊັ່ນ : ທູກວາງ, ອະໂສກ, ຢູຄາລິບຕັສ ແລະ ດອກເຈ້ຍ.

# ບົດທີດສະດີທີ 3
# ປັດໃຈ ແລະ ສະພາບແວດລ້ອມທີ່ມີອິດທິພົນຕໍ່ການຈະເລີນເຕີບໂຕ ຂອງໄມ້ດອກ-ໄມ້ປະດັບ

**ຈຸດປະສົງການສອນ**

1. ອະທິບາຍ ປັດໃຈເລື່ອງດິນໃນການປູກໄມ້ດອກ
2. ອະທິບາຍຜົນກະທົບຂອງແສງສະຫ່ວາງ ທີ່ມີຕໍ່ໄມ້ດອກ-ໄມ້ປະດັບ
3. ອະທິບາຍກ່ຽວກັບອຸ່ນນະພູມ ແລະ ຄວາມຊຸ່ມ
4. ອະທິບາຍກ່ຽວກັບທາດອາຫານທີ່ສຳຄັນ
5. ອະທິບາຍກ່ຽວກັບ ລະບົບນ້ຳ ແລະ ການໃຫ້ນ້ຳ.

## ເນື້ອໃນ

### 3.1 ດິນ

ດິນມີຄວາມສຳຄັນຕໍ່ການຈະເລີນເຕີບໂຕຂອງພືດ.ຜູ້ປູກຕ້ອງທຳຄວາມເຂົ້າໃຈ ແລະ ຮູ້ກ່ອນວ່າ ດິນທີ່ມີບັນຫານັ້ນຈະແກ້ໄຂບັນຫາແນວໃດແຕ່ຕ້ອງອາໃສຄວາມຮູ້ພື້ນຖານ ແລະ ຄວາມຕັ້ງໃຈບາງຄັ້ງອາດຕ້ອງການເວລາໄລຍະໜຶ່ງ ການທີ່ຕົ້ນໄມ້ຈະມີການຈະເລີນເຕີບໂຕ ໄດ້ເປັນປົກກະຕິນັ້ນຕ້ອງການປັດໃຈ 4 ປະການ ຄື:

1. ນ້ຳ ຫລືຄວາມຊຸ່ມທີ່ສະໝ່ຳ ສະເໝີ
2. ອາກາດ
3. ແຮ່ທາດອາຫານທີ່ພຽງພໍ.ພືດຕ້ອງການອາຫານຢ່າງໜ້ອຍ16 ທາດຫາກຂາດທາດໃດ ທາດນໜຶ່ງ ຈະມີອາການຜິດປົກກະຕິເກີດຂຶ້ນກັບພືດ.
4. ສະພາບແວດລ້ອມ ເຊັ່ນ : ອຸນຫະພູມທີ່ເໝາະສົມ ກັບການຈະເລີນເຕີບໂຕຂອງພືດ.

#### 3.1.1 ລັກສະນະດິນທີ່ເໝາະສົມຕໍ່ການການປູກໄມ້ດອກ

ດິນພຸຜຸ່ຍ ເໝາະແກ່ການລະບາຍນ້ຳ, ການຖ່າຍເທອາກາດ,ແສງແດດສ່ອງຜ່ານໄດ້ສະດວກ, ພືດສາມາດງອກງາມ ແລະ ຈະເລີນເຕີບໂຕໄດ້ດີ. ສ່ວນຫລາຍເປັນດິນທີ່ມີສີດຳເພາະມີຈຳນວນອິນຊີວັດຖຸປົນຢູ່ຫລາຍ, ມີພວກຈຸລິນຊີທີ່ເປັນປະໂຫຍດແກ່ພືດຫລາຍ ແລະ ຍັງເປັນໂຕຊ່ວຍ ໃຫ້ແກ່ການເໜົ່າເປື່ອຍ.

#### 3.1.2 ການປັບປຸງດິນ

ຄວນເພີ່ມທາດອິນຊີວັດຖຸທີ່ສະຫລາຍຕົວດີແລ້ວຈະໄດ້ຜົນໄວ.ອິນຊີວັດຖຸເປັນຄຳທີ່ມີຄວາມໝາຍ ກ້ວາງ ຂອງສິ່ງທັງຫລາຍທີ່ໄດ້ຈາກສິ່ງທີ່ມີຊີວິດ ເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ, ຊາກພືດ, ຊາກສັດ, ລຳຕົ້ນ-ໃບຂອງພືດ, ຮາກພືດ, ຂີ້ເລື່ອຍ ລວມທັງຈຸລິນຊີ ທີ່ມີຊີວິດໃນດິນ ແລະ ອື່ນໆ. ບໍ່ວ່າຈະມີຊີວິດຢູ່ ຫລືຕາຍແລ້ວ ແລະ ຢູ່ໃນຂັ້ນຕ່າງໆຂອງການສະຫລາຍຕົວ ກໍ່ນັບວ່າເປັນອິນຊີວັດຖຸຢູ່ໃນດິນທັງນັ້ນ. ອິນຊີວັດຖຸຈະຜຸພັງກໍ່ໄດ້ເນົ່າເປື່ອຍໄດ້ກໍ່ດ້ວຍຈຸລິນຊີ ຊ່ວຍຍ່ອຍສະຫລາຍ, ເວລາທີ່ໃຊ້ໃນການສະຫລາຍຕົວອາດເປັນ 2-3 ເດືອນ ຫລືຈົນເຖິງ 1 ປີ. ເມື່ອອິນຊີວັດຖຸສະຫລາຍຕົວດີແລ້ວ ຊ່ວຍໃຫ້ອະນຸພາກຂອງດິນເກາະກັນ, ຈະຊ່ວຍອຸ້ມນ້ຳ ແລະ ປົດປ່ອຍທາດອາຫານສຳຄັນໃຫ້ແກ່ພືດ. ການທີ່ເຮົາໃຫ້ຝຸ່ນຄອກລົງໄປໃນດິນກໍ່ເພາະຝຸ່ນຄອກເປັນອິນຊີວັດຖຸຢ່າງໜຶ່ງ ເມື່ອສະຫລາຍຕົວແລ້ວຈຶ່ງເທົ່າກັບເປັນການເພີ້ມອາຫານ ຫລືປັບປຸງດິນນັ້ນເອງ

### 3.1.3 ການປັບປຸງດິນໂດຍວິທີຊີວະພາບ

ແມ່ນການປັບປຸງດິນໂດຍວິທີໃຊ້ສິ່ງທີ່ມີຢູ່ໃນທຳມະຊາດໃຫ້ເປັນປະໂຫຍດເຊິ່ງໄດ້ຈາກ ເສດພືດ ຫລື ສັດ ເຊັ່ນ: ຝຸ່ນຄອກ ແລະ ຝຸ່ນບົ່ມ.

1. ຝຸ່ນຄອກ: (Manure) ໄດ້ແກ່ມູນສັດຕ່າງໆ ເຊັ່ນ:ມູນງົວ, ມູນຄວາຍ, ມູນເປັດ ແລະ ມູນໄກ່ຖືວ່າຂາດບໍ່ໄດ້ສຳລັບການປັບປຸງດິນປູກໂດຍສະເພາະໄມ້ໂຖ
2. ຝຸ່ນບົ່ມ: ເປັນວັດຖຸປັບປຸງດິນໄດ້ດີ, ຊ່ວຍປັບປຸງຄຸນນະພາບທາງພີຊິກຂອງດິນດີຂຶ້ນ, ເຮັດໃຫ້ດິນຜຸຜ່ຍ, ລະບາຍນ້ຳໄດ້ດີ ແລະ ຍັງເກັບຄວາມຊຸ່ມໄດ້ດີພໍເໝາະກັບພືດ ນອກຈາກ ນີ້ຍັງເພີ່ມທາດອາຫານໃຫ້ແກ່ພືດ .
3. ໃບໄມ້ຜຸແຫ້ງ: ຖືວ່າເປັນວັດຖຸປັບປຸງດິນໄດ້ດີ, ຊ່ວຍປັບປຸງການລະບາຍນ້ຳ, ເຮັດໃຫ້ດິນປະສົມ ມີຊ່ອງຫວ່າງ ແລະ ມີທາດອາຫານແກ່ພືດອີກ.

## 3.2 ແສງສະຫ່ວາງ

ແສງທີ່ຕົ້ນໄມ້ໄດ້ຮັບມີຄວາມເຂັ້ມ ແລະ ຈຳນວນຊົ່ວໂມງແສງແດດຕ່າງກັນໄປຕາມລະດູການຄວາມເຂັ້ມຂອງແສງໃນແຕ່ລະມື້ຂອງລະດູຕ່າງໆ ແສງຂອງດວງອາທິດມີຄວາມເຂັ້ມຕ່າງກັນ ປົກກະຕິໃນລະດູຝົນ ແລະ ລະດູໜາວຄວາມເຂັ້ມຂອງແສງຈະຕ່ຳກ່ວາລະດູຮ້ອນ ຖ້າຄວາມເຂັ້ມຂອງແສງມີຫລາຍພືດຈະສັງເຄາະແສງໄດ້ຫລາຍ ພືດຈະມີອາຫານເກັບໄວ້ໄດ້ຫລາຍ ທັງນີ້ຂຶ້ນກັບຊະນິດຂອງດອກໄມ້ເຊັ່ນ: ໄມ້ໃນຮົ່ມ, ໄມ້ໃບ ຫລື ຖ້າແສງຫລາຍເກີນໄປ ໃບຈະໄໝ້ ຫລື ໄມ້ໃບບາງຊະນິດ ເຊັ່ນ: ເສດຖີປະສົມ, ບອນສີ ຈະໃຫ້ສີດີກ່ວາ.

### 3.2.1 ຄຸນນະພາບຂອງແສງສະຫ່ວາງ ແລະ ໄລຍະເວລາ

ຄຸນນະພາບຂອງແສງສະຫວ່າງ ຄືຄຸນລັກສະນະບັດສະເພາະຂອງແສງທີ່ເຮັດໃຫ້ພືດສາມາດຈະເລີນເຕີບໂຕໄດ້ພາຍໃຕ້ແສງທຽນ ຫລື ແສງໄຟຟ້າ. ໃນການສັງເຄາະແສງຄວາມສຳພັນລະຫ່ວາງຄື້ນແສງສີແດງ ແລະ ຄື້ນແສງສີຟ້າ ຈະຕ້ອງມີອັດຕາສ່ວນທີ່ແນ່ນອນ.

ສີຂອງແສງທີ່ເຫັນນັ້ນ ຄືຄຸນລົມບັດຂະໜາດຄື້ນແສງ ເພາະສະນັ້ນລະດັບພະລັງງານຂອງແຕ່ລະສີຂອງແສງຈະຕ່າງກັນ. ແສງມີສີນ້ຳເງິນທີ່ມີຂະໜາດຄື້ນແສງສັ້ນ ຄວາມຖີ່ສູງມີພະລັງງານຫລາຍກ່ວາປະມານ 8 ເທົ່າຂອງແສງສີແດງ ພືດຕ້ອງການແສງເພື່ອໃຫ້ຂະບວນການສັງເຄາະແສງດຳເນີນໄປ ແລະ ຂະບວນການສັງເຄາະແສງຈະເກີດໃນໂຄງສ້າງພິເສດພາຍໃນຈຸລັງ ຫລື ອົງປະກອບພາຍໃນຈຸລັງທີ່ເອີ້ນວ່າ ໂຄລໂຣພລາສ (Chloroplasts) ບັນຈຸສີທີ່ສາມາດຈັບແສງ ແລະ ປ່ຽນພະລັງງານອີເລັກໂຕແມັດນິຕິກ ເປັນພະລັງງານເຄມີທີ່ຈຳເປັນທີ່ຊຸກຍູ້ຂະບວນການສັງເຄາະແສງ ເມື່ອເມັດສີຄືໂຄລໂຣຟີນ Chlorophyll (a) ແລະໂຄລໂຣຟີນ Chlorophyll (b) ແລະ ແຄໂຣທີນອຍ (Carotenoid) ໄດ້ຮັບລັງສີທີ່ເບິ່ງເຫັນດ້ວຍຕາເຫລົ່ານີ້ຈະດູດຊັບແສງສ່ວນໃຫຍ່ເປັນແສງສີແດງ ແລະ ແສງສີຟ້າຂອງກຸ່ມແສງ ແລ້ວສະທ້ອນແສງສີຂຽວ. ການດູດຊັບແສງນີ້ອາດທົດລອງໄດ້ຈາກ ການປູກພືດເປັນກຸ່ມທີ່ຂະໜາດເທົ່າກັນໃນ ຄວາມເຂັ້ມຂອງແສງຄືກັນ.

ໄລຍະເວລາ : ຈຳນວນຊົ່ວໂມງຂອງແສງໝາຍເຖິງໄລຍະເວລາທີ່ຕົ້ນໄມ້ໄດ້ຮັບແສງສະຫ່ວາງ ໂດຍບໍ່ຄຳນຶງເຖິງຄວາມເຂັ້ມຂອງແສງ. ໃນລະດູໜາວ ຈຳນວນຊົ່ວໂມງແສງຈະສັ້ນ ແລະ ລະດູຮ້ອນຈະມີມື້ຍາວ ພືດບາງຊະນິດເກີດຕາດອກໃນມື້ສັ້ນ ເຊັ່ນ: ຕົ້ນບົວຕອງຈະເລີ່ມອອກດອກໃນຊ່ວງທີ່ມື້ເລີ່ມສັ້ນລົງ ແລະ ມີດອກບານເປັນຈຳນວນຫລາຍ. ໃນເດືອນ ພະຈິກໃບຂອງຕົ້ນຄຣິສມາສຈະເລີ່ມປ່ຽນເປັນສີແດງ ໃນຊ່ວງເດືອນຕຸລາເປັນຕົ້ນໄປ ແລະ ມີສີແດງສົດພ້ອມໆກັນໃນຊ່ວງເດືອນທັນວາ ຈຶ່ງເອີ້ນວ່າຕົ້ນຄຣິສມາສ ແລະ ເປັນສັນຍາລັກຂອງເທດສະການຄຣິສມາສດ້ວຍ. ຄວາມສັ້ນ ແລະ ຄວາມຍາວຂອງມື້ ມີຜົນຕໍ່ລັກສະນະຂອງຮາກໄມ້ດອກ-ໄມ້ປະດັບບາງຊະນິດ ຮາກຈະສັ້ນຖ້າປູກໃນລະດູໜາວ ເຊິ່ງມີຊ່ວງມື້ສັ້ນ ແລະ ມີຮາກຍາວເປັນຝອຍເມື່ອປູກໃນລະດູ ຮ້ອນ ຊຶ່ງມີ ມື້ຍາວ.

### 3.2.2 ຄວາມເຂັ້ມຂອງແສງ ແລະ ປະລິມານຂອງແສງ

1. ຄວາມເຂັ້ມຂອງແສງ : ຈະສູງ ຖ້າຫາກບໍ່ມີເມກ ຫລື ສະພາບຄວາມຊຸ່ມໃນອາກາດມີພຽງເລັກນ້ອຍ ເຊັ່ນ ໃນເຂດທະເລຊາຍ ຄວາມເຂັ້ມຂອງແສງຈະນ້ອຍ. ຖ້າຢູ່ໃນເຂດທີ່ມີຄວາມຊື້ນສູງ ຫລື ເຂດທີ່ມີເມກ ເພາະວ່າອາຍນ້ຳດູດຮັບລັງສີໄປເປັນສ່ວນຫລາຍ. ສະພາບການດັ່ງກ່າວນີ້ເກີດຂຶ້ນເພາະມຸມ 23,5 ອົງສາ ຄວາມເຂັ້ມຂອງແສງຈຶ່ງປ່ຽນ ແປງ ແລະ ຈະຕົກກະທົບພື້ນຜິວໂລກໂດຍກົງຈຳນວນຫລາຍ ໃນຊ່ວງລະດູໜາວມື້ຍາວຈະປ່ຽນ ແປງຫລາຍໃນເຂດໃກ້ຂົ້ວໂລກເພາະຈະມີແສງຕະຫລອດ 24 ຊົ່ວໂມງ ໃນລະດູໜາວການປ່ຽນແປງແບບນີ້ຈະມີບໍ່ຫລາຍເທົ່າໃດເມື່ອຢູ່ໃນຕຳແໜ່ງເສັ້ນສູນສູດ ເຊິ່ງມີແສງເປັນເວລາ 12-13 ຊົ່ວໂມງ ຕໍ່ມື້ຕະຫລອດປີ.

2. ປະລິມານແສງ : ກິດຈະກຳການສັງເຄາະແສງໃນພືດຈະມີສັດສ່ວນໂດຍກົງກັບຄວາມຍາວຂອງມື້ພາຍໃນຂອບເຂດຈຳກັດ ແລະ ປັດໄຈອື່ນໆທີ່ເທົ່າກັນ. ການທີ່ໃບໄດ້ຮັບແສງຍາວນານການສັງເຄາະແສງກໍ່ຈະຍາວນານຕາມໄປດ້ວຍເຮັດໃຫ້ພືດຈະເລີນເຕີບໂຕໄດ້ໄວ

ກ່ວາ  ສະນັ້ນ ການປູກພືດ ຫລື ເກັບພືດໄວ້ໃນເຮືອນກ້າເບັ້ງ ຈະຕ້ອງຄິດສະເໝີເຖິງຜົນຂອງການສັງເຄາະແສງທີ່ຈະໄດ້ຮັບຈາກແສງຫຼຽມ.

## 3.3 ອຸນຫະພູມ

### 3.3.1 ອຸນຫະພູມ ແລະ ການອອກດອກ

1. ອຸນຫະພູມ: ມີຜົນຕໍ່ພືດຫລາຍຢ່າງເຊັ່ນ: ການຈະເລີນເຕີບໂຕຖ້າຫາກອາກາດໜາວຫຼາຍຕົ້ນໄມ້ຈະເລີນເຕີບໂຕຊ້າ ແລະ ເຕີບໂຕໄດ້ດີໃນລະດູຝົນເຊິ່ງມີອຸນຫະພູມພໍເໝາະ ແລະ ຄວາມຊຸ່ມສູງດ້ວຍ.

2. ການອອກດອກ: ໄມ້ດອກບາງຊະນິດຕ້ອງການອຸນຫະພູມຕໍ່າໃນການອອກດອກ ເຊັ່ນ: ຫົວລິບໃນທຳມະຊາດຫົວຂອງຫົວລິບຈະໄດ້ຮັບອາກາດເຢັນຕະຫລອດ ລະດູໜາວ ໃນຕ່າງປະເທດເຮັດໃຫ້ເກີດຕາດອກ ແລະ ດອກຈະບານໃນລະດູໃບໄມ້ລົ່ນເມື່ອອຸນຫະພູມອຸ່ນ ຂຶ້ນ.

## 3.4 ຄວາມຊຸ່ມ

ໄມ້ດອກຈະຈະເລີນເຕີບໂຕ ເມື່ອໄດ້ຮັບນ້ຳຢ່າງເຕັມສ່ວນ, ນ້ຳມີໜ້າທີ່ໃນຂະບວນການຕ່າງໆທີ່ເກີດຂຶ້ນໃນພືດ

### 3.4.1 ຄວາມຊຸ່ມທີ່ມີຜົນກະທົບ

1. ການແບ່ງຈຸລັງ ແລະ ການຂະຫຍາຍຕົວຂອງຈຸລັງ : ຈຸລັງຈະພອງຕົວ ແລະ ແບ່ງຕົວໄດ້ເຕັມ  ທີ່ເມື່ອພືດໄດ້ຮັບຄວາມຊຸ່ມພຽງພໍ. ຖ້າເນື້ອເຍື່ອຂອງພືດພອງຕົວໄດ້ນ້ອຍ ການແບ່ງຈຸລັງຈະຊ້າລົງ  ສັງເກດໄດ້ຈາກຕົ້ນກຸຫລາບ ເມື່ອເລີ່ມມີດອກກ້ານດອກຈະສັ້ນຫລາຍ ແລະ ຈະຢືດອອກພ້ອມກັນດອກໃຫຍ່ຂຶ້ນຈົນໃຫຍ່ເຕັມສ່ວນ ຖ້າຂາດນ້ຳກ້ານດອກຈະສັ້ນຫລາຍ ຄຸນນະພາບດອກກໍ່ຈະຫລຸດລົງ ຖ້າໄດ້ຮັບນ້ຳພຽງພໍ ຈະເຮັດໃຫ້ຕົ້ນເຕີບໂຕດີ ມີໃບໃຫຍ່ ແລະ ດອກສົມ ບູນ.

2. ການສັງເຄາະແສງ:  ພືດຕ້ອງການນ້ຳມາໃຊ້ ໃນຂະບວນການສ້າງອາຫານເຊິ່ງເອີ້ນ ວ່າ ການສັງເຄາະແສງ  ຖ້າພືດຂາດນ້ຳຂະບວນການນີ້ຈະເກີດຂຶ້ນບໍ່ໄດ້.

3. ການຄາຍນ້ຳ: ເມື່ອພືດສ້າງອາຫານຂຶ້ນ 1 ກຣາມ ພືດຕ້ອງໃຊ້ນ້ຳ 500 ກຣາມ ມື້ໜຶ່ງໆ ພືດຈຶ່ງຕ້ອງໃຊ້ນ້ຳເປັນຈຳນວນຫລາຍເພື່ອການຈະເລີນເຕີບໂຕ

3. ການຂະຫຍາຍພັນ: ການທີ່ເມັດຈະງອກ ຫລື ກິ່ງຊຳຈະງອກຮາກ ວັດຖຸທີ່ໃຊ້ກ້າ ຫຼື ຊຳຕ້ອງຊຸ່ມສະເໝີ ຖ້າວັດຖຸດັ່ງກ່າວແຫ້ງຈະເຮັດໃຫ້ເມັດງອກຊ້າຫລື ບໍ່ງອກ ແລະກິ່ງຊຳຈະຕາຍກ່ອນອອກຮາກ.ປົກກະຕິ ພືດດູດນ້ຳໄປໃຊ້ໂດຍ ທາງຮາກ ດິນຈຶ່ງຕ້ອງ ມີຄວາມຊຸ່ມພຽງພໍແຕ່ຖ້າຫາກດິນຊຸ່ມເກີນໄປ  ຮາກຈະບໍ່ມີການຫາຍໃຈ  ເພາະວ່ານ້ຳຈະເຂົ້າແທນທີ່ອາກາດໃນ

ດິນເຮັດໃຫ້ພືດຈະເລີນເຕີບໂຕບໍ່ໄດ້. ພືດທີ່ເກີດໃນດິນທີ່ຊຸ່ມ ຫລື ແຫ້ງເກີນໄປ ພືດຈະມີອາການແຫ່ວເໝືອນກັນເພາະທັງສອງກຳລັງຕົກຢູ່ໃນສະພາບຂາດນ້ຳ ຄືຕົ້ນໜຶ່ງມີນ້ຳຫລາຍເກີນໄປຈົນຮາກເໜົ່າບໍ່ສາມາດດູດນ້ຳມາໃຊ້ໄດ້. ສ່ວນອີກຕົ້ນໜຶ່ງມີຮາກດີແຕ່ດິນແຫ້ງມີນ້ຳບໍ່ພຽງພໍໃຫ້ດູດມາໃຊ້ຈຶ່ງມີອາການແຫ່ວແຫ້ງເຊັ່ນດຽວ.

## 3.5 ແຮ່ທາດອາຫານ

ການຈະເລີນເຕີບໂຕຂອງພືດຕ້ອງອາໃສແຮ່ທາດຕ່າງໆ ຢ່າງນ້ອຍ 16 ທາດໃນປະລິມານຕ່າງກັນແລ້ວແຕ່ຊະນິດພືດເຊັ່ນດຽວກັນ. ຖ້າເປັນໂຄງສ້າງທີ່ສຳຄັນ ກໍ່ໃຊ້ບາງທາດເປັນຈຳນວນຫລາຍ ແລະ ບາງທາດກໍ່ໃຊ້ເປັນຈຳນວນນ້ອຍແຕ່ທັງ 16 ທາດຈະເວົ້າເປັນທາດ ທີ່ຈຳເປັນແກ່ຊີວິດຂອງພືດເທົ່ານັ້ນ ຖ້າຂາດທາດໃດໄປ ຫລື ໄດ້ຮັບໃນປະລິມານບໍ່ພໍຈະສະແດງອາການຜິດປົກກະຕິ ຢຸດການຈະເລີນເຕີບໂຕ ແລະ ຕາຍໄດ້.

### 3.5.1 ທາດອາຫານທີ່ພືດຕ້ອງການໃນປະລິມານຫລາຍ

ຄື ຄາບອນໄດອອກໄຊ໌ (Carbon dioxide), ໄຮໂດເຈນ (Hydrogen) ອອກຊີເຈນ, ໄນໂຕຣເຈນ (Nitrogen), ຟອສຟໍຣັສ (Phosphorous) ໂພແທສຊຽມ (Potassium) ແຄລຊຽມ (Calcium), ຊັລເຟີ (Sulfur) ແລະ ແມກນີຊຽມ(Magnesium).

### 3.5.2 ແຮ່ທາດອາຫານທີ່ຈຳເປັນ

ມີ 7 ທາດ ແຕ່ພືດຕ້ອງການໃນປະລິມານນ້ອຍຫລາຍ ຄື: ເຫລັກ, ແມງການີສ (Manganese), ໂບຣອນ (Boron), ທອງແດງ ( Copper) ສັງກະສີ (Zinc), ຄຣໍລີນ (Chlorine) ແລະ ທາດ ໂມລິບດີນຳ (Molidinum) ເຊິ່ງຕ້ອງການໃນປະລິມານນ້ອຍສຸດ ຄືນ້ອຍກ່ວາ 1 ສ່ວນ ໃນລ້ານ ທາດອາຫານເຫລົ່ານີ້ ມີຢູ່ໃນດິນແດ່ແລ້ວຈະມີບໍ່ພໍກໍ່ຕໍ່ເມື່ອດິນນັ້ນໃຊ້ປູກພືດຕິດຕໍ່ກັນດົນນານ ຫລື ເປັນດິນຊາຍ, ດິນດ່າງ ທີ່ບໍ່ໄດ້ຮັບການປັບປຸງ.

## 3.6 ນ້ຳ ແລະ ການໃຊ້ນ້ຳ

### 3.6.1 ຄວາມສຳຄັນຂອງນ້ຳ

ພືດທີ່ຈະເລີນເຕີບໂຕໄດ້ຈະຕ້ອງມີນ້ຳຢູ່ປະມານ 90% ແລ້ວຈະສະສົມໄວ້ໃນເນື້ອເຍື່ອຊະນິດຕ່າງໆຂອງພືດ. ນ້ຳເປັນວັດຖຸດິບໃນຂະບວນການສັງເຄາະແສງ ປະລິມານນ້ຳທີ່ໃຊ້ໜ້ອຍຫລາຍ ແມ່ນຂຶ້ນຢູ່ກັບພືດ ແລະ ແສງແດດໃນແຕ່ລະລະດູ ເມື່ອແສງແດດຈາກດວງຕາເວັນແຮງ ພືດຈະສູນເສຍນ້ຳເປັນຈຳນວນຫລາຍ ເນື່ອງຈາກການຄາຍນ້ຳ ແລະ ດິນກໍ່ຈະສູນເສຍນ້ຳດ້ວຍ. ການສູນເສຍນ້ຳດ້ວຍການລະເຫີຍນ້ຳ ການຂາດນ້ຳທັງສອງທາງນີ້ເອີ້ນວ່າ ການລະເຫີຍຄາຍນ້ຳ. ການທີ່ພືດໃຊ້ນ້ຳໃນປະລິມານທີ່ຕ່າງກັນນັ້ນ ອາດຈະເນື່ອງຈາກວ່າ ພືດມີຂະບວນການ

ທາງສະລີລະວິທະຍາແຕກຕ່າງກັນ ແຕ່ຄວາມແຕກຕ່າງກັນທີ່ເຫັນໄດ້ຢ່າງຈະແຈ້ງຄື ອາຍຸການເກັບກ່ຽວຂອງພືດ.

### 3.6.2 ວິທີການໃຫ້ນ້ຳ

ການໃຫ້ນ້ຳ ກຳນົດໄດ້ຈາກຄວາມຊຸ່ມຂອງດິນ ແລະ ຄວາມຕ້ອງການນ້ຳຂອງພືດ. ສຳລັບການກຳນົດຊ່ວງເວລາການໃຫ້ນ້ຳຂອງພືດນັ້ນ ຈະກຳນົດໂດຍຖືເອົາສະພາບຂອງດິນທີ່ແຫ້ງຂາດນ້ຳແມ່ນບໍ່ໄດ້ ເພາະວ່າຖ້າກຳນົດເຊັ່ນນັ້ນ ພືດຈະແຫ່ວແຫ້ງຕາຍ ແລະ ການໃຫ້ນ້ຳທີ່ຖືກຕ້ອງກໍ່ຄວນຈະໃຫ້ນ້ຳທຸກຄັ້ງເມື່ອຄວາມຊຸ່ມໃນດິນເຫລືອພຽງເຄິ່ງໜຶ່ງ ເພາະສະນັ້ນຕ້ອງໃຫ້ນ້ຳເພີ່ມອີກເພື່ອໃຫ້ນ້ຳໃນດິນໄດ້ປະລິມານພຽງພໍທີ່ຈະເຮັດໃຫ້ດິນປຽກພຽງພໍຕາມຄວາມຕ້ອງການຂອງພືດທີ່ປູກນັ້ນ. ວິທີການໃຫ້ນ້ຳແກ່ພືດມີ 2 ທາງຄື:

1. ການໃຫ້ນ້ຳໃຕ້ດິນ : ການໄຫລຊຶມແກ່ພືດທາງໃຕ້ດິນນັ້ນ ມັກຈະເຮັດໂດຍການຄວບຄຸ້ມນ້ຳໃຕ້ດິນໃຫ້ຢູ່ໃນລະດັບຮາກພືດຈະແຜ່ກະຈາຍໄປເຖິງ ຫລື ໂດຍການໃຫ້ນ້ຳທາງທໍ່ເຊິ່ງຝັງໄວ້ໃຕ້ດິນ ເຊັ່ນ : ທໍ່ລະບາຍນ້ຳ ຫລື ເຈາະດິນໃຫ້ເປັນຮູບແບບດຽວກັບທໍ່ ເຊັ່ນ : ການ ຝັງທໍ່ນ້ຳຢູ່ໃຕ້ດິນແລ້ວຂຸດເປັນຮ່ອງປ່ອຍນ້ຳໄປຕາມຮ່ອງ ແລ້ວປ່ອຍໃຫ້ນ້ຳຊຶມເຂົ້າສູ່ຮາກພືດ.

2. ການໃຫ້ນ້ຳເທິງຜີວດິນ : ຄືການໃຫ້ນ້ຳໃນລັກສະນະຂອງການໄຫລຊຶມຂອງນ້ຳຈາກໜ້າດິນ ເຊັ່ນ: ການທົດນ້ຳດ້ວຍສາຍຢາງ, ບົວທົດນ້ຳ ຫລື ໃຫ້ນ້ຳດ້ວຍລະບົບຝົນທຽມ ເຊິ່ງນ້ຳຜ່ານມາທາງທໍ່ນ້ຳໃຊ້ຄວາມດັນ ອັດນ້ຳອອກມາທາງຫົວສີດ.

# ບົດທົດສະດີທີ 4
# ໂຮງເຮືອນ, ພາຊະນະ ແລະ ວັດຖຸປູກ

**ຈຸດປະສົງການສອນ**

1. ບອກລັກສນະໂຮງເຮືອນກ້າເບ້ຍໄມ້ທີ່ເຫມາະສົມ
2. ອະທິບາຍ ພາຊະນະໃຊ້ສຳລັບການກ້າເບັ້ຍໄມ້.
3. ອະທິບາຍ ວັດສະດຸ ໃຊ້ສຳລັບການກ້າເບັ້ຍໄມ້.
4. ອະທິບາຍ ວັດສະດຸໃຊ້ສຳລັບການຜະລິດນ້ຳກັດຊີວະພາບ ໃຊ້ສຳລັບການປູກ-ກ້າ ເບັ້ຍໄມ້.

## ເນື້ອໃນ

### 4.1 ເຮືອນກ້າເບັ້ຍ

ໝາຍເຖິງເຮືອນຕົ້ນໄມ້ ຫລື ເຮືອນເພາະຊຳ ຫລື ບາງຄົນເອີ້ນວ່າຮັງ ເຊັ່ນ: ຮັງກ້ວຍໄມ້ນັ້ນມີຫລາຍຊະນິດແຕກຕ່າງກັນ ທັງໃນລັກສະນະຮູບຮ່າງ ຈຸດປະສົງທີ່ໃຊ້ ແລະ ການກໍ່ສ້າງທົ່ວໆໄປແລ້ວ ຄົນສ່ວນຫລາຍເອີ້ນກັນວ່າເຮືອນເພາະຊຳທັງໆທີ່ເຮືອນເພາະຊຳຊະນິດນີ້ ບໍ່ໄດ້ໃຊ້ສຳລັບການເພາະຊຳເລີຍ ເຊັ່ນ ເຮືອນກ້ວຍໄມ້ໝ້າງົວ ຫລືເຮືອນເພາະຊຳທີ່ເກັບພັນໄມ້. ດັ່ງນັ້ນ, ຈຶ່ງຂໍຊີ້ແຈງ ແລະ ອະທິບາຍຄືນໃໝ່ໃຫ້ເຂົ້າໃຈທີ່ພວກເຮົາເອີ້ນກັນວ່າເຮືອນເພາະຊຳນັ້ນໝາຍເຖິງເຮືອນເພາະຊຳຊະນິດໃດ ສາມາດແບ່ງອອກເປັນຊະນິດຕ່າງໆ ເພື່ອສະດວກໃນການສ້າງເຮືອນໃຫ້ຖືກຕ້ອງຕາມຈຸດປະສົງ.

#### 4.1.1 ເຮືອນເພາະຊຳ

ໝາຍເຖິງເຮືອນທີ່ສ້າງຂຶ້ນດ້ວຍກະແຕະຕີໃຫ້ມີສ່ອງຫ່ວາງຫ່າງກັນບໍ່ເກີນ 2.5 ຊຕມ ເພື່ອໃຫ້ແສງສະຫ່ວາງເຂົ້າມາໄດ້ ຫລື ເວລາລົມພັດມາ, ສ່ວນຫລາຍແມ່ນສ້າງດ້ວຍໄມ້. ເຮືອນກ້າເບັ້ຍທີ່ເອີ້ນວ່າ Lath house ມີຈຸດປະສົງເພື່ອເຮັດສະຖານທີ່ເພາະຊຳ ຫລື ຂະຫຍາຍພັນໄມ້ໂດຍກົງ ດັ່ງນັ້ນ ພາຍໃນເຮືອນເພາະຊຳປະເພດນີ້ ເພື່ອລວມພັນໄມ້ທີ່ບໍ່ທັນແຂງແຮງໄວ້ຢູ່ບ່ອນດຽວ ເພື່ອສະດວກໃນການດູແລຮັກສາຫລຸດຜ່ອນແສງແດດໃຫ້ນ້ອຍລົງ ແລະ ເຮັດໃຫ້ມີຄວາມຊຸ່ມສູງ ເໝາະແກ່ພັນໄມ້ທີ່ມີອາຍຸນ້ອຍບໍ່ແຂງແຮງກ່ອນທີ່ຈະນຳໄປປູກກາງແຈ້ງ.

#### 4.1.2 ເຮືອນຕົ້ນໄມ້ (Lath shelter)

ໝາຍເຖິງເຮືອນໄມ້ແຂ ຫລືໄມ້ກະແຕະ ຈຸດປະສົງຂອງການສ້າງເຮືອນຕົ້ນໄມ້ຊະນິດນີ້ທີ່ເອີ້ນວ່າເຮືອນຕົ້ນໄມ້ ກໍ່ເພື່ອໃຊ້ເປັນບ່ອນລວບລວມພັນໄມ້ທີ່ຕ້ອງການແສງແດດນ້ອຍ ຫລື ໄມ້ໃນຮົ່ມ. ພັນຊະນິດທີ່ບໍ່ສາມາດຈະເລີນເຕີບໂຕໃນບ່ອນທີ່ມີແສງແດດແຮງໂພດ ຫລື

ກາງແຈ້ງເມື່ອເຮົາຕ້ອງການປູກເພື່ອເບິ່ງຄວາມງາມຕ້ອງນຳມາໄວ້ໃນໂຮງເຮືອນ ຫລື ເຮືອນຕົ້ນໄມ້ ເຊັ່ນ ພວກໜ້າງົວ ເຮືອນຕົ້ນໄມ້ຊະນິດນີ້ນິຍົມກັນສ້າງໃຫ້ມີຝາ ແລະ ໄມ້ແຂທ່າງໆອ້ອມຮອບ ຫລັງຄາ ບາງເທື່ອມີເຄືອໄມ້ປົກຫຸ້ມ ເພື່ອເພີ່ມຄວາມຊຸ່ມຊື່ນ ແລະ ໃຫ້ຄວາມຮົ່ມຫລາຍຂື້ນ.

### 4.1.3 ຊຸ້ມເຮືອນຕົ້ນໄມ້

ໝາຍເຖິງຊຸ້ມເຮືອນຕົ້ນໄມ້ຊະນິດທີ່ເຮັດຂື້ນໄວ້ຕົກແຕ່ງບ້ານໃຫ້ຈົບງາມ ອາດມີການປູກພັນໄມ້ເລືອດິນເກີດຂື້ນຢູ່ນຳກັນ ບາງເທື່ອກໍ່ບໍ່ມີອາດມີໄມ້ໂຖໄມ້ພຸ່ມ. ໄມ້ດອກປູກປະດັບຊຸ້ມເຮືອນຕົ້ນໄມ້ ຈຸດປະສົງທີ່ສຳຄັນຂອງເຮືອນຕົ້ນໄມ້ຊະນິດນີ້ ກໍ່ເພື່ອໃຫ້ມີຄວາມຈົບງາມ ແລະ ຮົ່ມເຢັນ ເຊິ່ງເປັນໜ້າຢູ່ໜ້າຊົມ ຕາມຊຸ້ມຕົ້ນໄມ້ເປັນບ່ອນຕັ້ງໄມ້ດອກ-ໄມ້ປະດັບບາງຊະນິດທີ່ບໍ່ຕ້ອງການແສງສະຫ່ວາງ ຫລື ແສງແດດຮ້ອນຈົນເກີນໄປ. ດັ່ງນັ້ນ, ຊຸ້ມເຮືອນຕົ້ນໄມ້ຊະນິດນີ້ຈຶ່ງມີລັກສະນະຮູບຮ່າງແຕກຕ່າງກັນແລ້ວແຕ່ຜູ້ຈັດສວນ ຫລື ເຈົ້າຂອງເຮືອນຈະອອກແບບ ໃຫ້ກັບຕົວອາຄານ ຫລື ບໍລິເວນ ເຊັ່ນ: ມີລັກສະນະສີ່ຫ່ລຽມ, ຫົກຫ່ລຽມ ແລະ ລວດລາຍແປກໆແຕກຕ່າງກັນ. ບາງເຮືອນກໍ່ທາສີ ຫລື ມີຕັ່ງນັ່ງຫລິ້ນ ຫລື ເຄື່ອງເຟີນີເຈີ (Furniture) ປະດັບໄປພ້ອມ ເຮືອນຕົ້ນໄມ້ຊະນິດນີ້ສ້າງ ຂື້ນທາງດ້ານໜ້າທາງຫລັງ ທາງຂ້າງດ້ານໃດດ້ານໜຶ່ງ ທີ່ເຫັນວ່າງາມ ແລະ ເໝາະສົມທີ່ສຸດ ຫລືອາດຈະຕິດກັບຮົ້ວດ້ານໃດດ້ານນຶ່ງ ຫລືອາດຈະສ້າງ ເປັນຫລັງຄາຫົກຫຼ່ຽມ ອ້ອມຮອບຕົ້ນໄມ້ໃຫຍ່ໆເປັນກະໂຈມ ຫລື ຊຸ້ມແບບຊິງຊ້າຫລາຍຢ່າງຫລາຍແບບຕາມໃຈຈະອອກແບບທີ່ເຫັນວ່າງາມ ບາງເຮືອນອາດໃຊ້ແວ່ນແກ້ວເພື່ອປ້ອງກັນຝົນ ຫລື ກັນນ້ຳໝອກ. ນອກຈາກນີ້, ອາດສ້າງເປັນຫລັງຄາໄມ້ແຂ ມີພັນໄມ້ເຄືອ ເພື່ອໃຊ້ເປັນບ່ອນຈອດລົດພັກຊົ່ວຄາວ ແລະ ບໍລິເວນດ້ານຂ້າງມີໄມ້ກະຖັງທີ່ປູກລົງໃນດິນໃຫ້ສວຍງາມ .

### 4.1.4 ເຮືອນແກ້ວ

ໝາຍເຖິງເຮືອນທີ່ສ້າງຂື້ນຢ່າງມິດງຽບມີແກ້ວປົກຫລັງຄາ ເພື່ອໃຫ້ແສງສະຫວ່າງລອດເຂົ້າມາຫລັງຄາມັກຈະໃຊ້ແວ່ນເພື່ອຫລຸດຜ່ອນແສງແດດໃຫ້ນ້ອຍລົງ ດ້ານຂ້າງອາດກໍ່ເປັນກຳແພງທາງໃນສາມາດຄວບຄຸມອຸນຫະພູມ, ຄວາມຊຸ່ມ ແລະ ການລະບາຍອາກາດໄດ້ດີ. ເຮືອນແກ້ວມີຄວາມຈຳເປັນຢ່າງຍິ່ງໃນການຂະຫຍາຍພັນໄມ້ ຫລື ປູກພັນໄມ້ທຸກຊະນິດ. ໃນປະເທດທີ່ມີອາກາດໜາວ ຫຼື ຮ້ອນຫຼາຍອາກາດບໍ່ເໝາະສົມ ພັນໄມ້ບໍ່ສາມາດຈະເລີນເຕີບໂຕໃຫ້ຜົນຜະລິດຕະຫຼອດປີ ຈຶ່ງຕ້ອງມີເຮືອນແກ້ວເພື່ອຂະຫຍາຍຫຼື ປູກຮັກສາແນວພັນໄມ້.

ອຸປະກອນຕ່າງໆທີ່ໃຊ້ໃນເຮືອນແກ້ວມີຫລາຍຢ່າງ ເຊັ່ນ : ເຄື່ອງປັບຄວາມຮ້ອນ, ພັດລົມເພື່ອລະບາຍອາກາດ ແລະ ເຄື່ອງສີດນ້ຳ, ພາຊະນະສຳລັບກ້າ ແລະ ຊຳເບັ້ຍໄມ້ ກໍຕ້ອງມີທີ່ໃຫ້ຄວາມຮ້ອນຜ່ານເພື່ອໃຫ້ດິນກ້າ ແລະ ຊຳ ມີອຸນຫະພູມສູງພໍເໝາະສົມ ໃຫ້ແກ່ການແຕກງອກຂອງເມັດ ແລະ ການຈະເລີນເຕີບໂຕຂອງຮາກ.ຄ່າໃຊ້ຈ່າຍໃນການກໍ່ສ້າງກໍ່ຈະສູງຈຶ່ງ ເຮັດໃຫ້ເຮືອນແກ້ວແຕກຕ່າງກັບເຮືອນຕົ້ນໄມ້ຊະນິດອື່ນໆ. ເຮືອນແກ້ວໃນປະເທດທີ່ໜາວສ້າງ ຂື້ນສະເພາະ ເພື່ອການຂະຫຍາຍ ພັນພືດ, ຜະລິດພັນໄມ້ ແລະ ຜະລິດພືດຜັກ ເພື່ອການຄ້າໃຫ້ໄດ້

ກຳໄລ ຫລື ບໍ່ດັ່ງນັ້ນກໍ່ສ້າງຂຶ້ນ ເພື່ອປະໂຫຍດທາງການສຶກສາ ເຊັ່ນ: ສວນພຶກສາດທີ່ລວມພັນໄມ້ເຂດຮ້ອນໄວ້ເພື່ອການສຶກສາເທົ່ານັ້ນ.

## 4.2 ວັດຖຸ ແລະ ອຸປະກອນທີ່ໃຊ້ປູກ

### 4.2.1 ອຸປກອນທີ່ໃຊ້ປູກ

ວັດຖຸ ອຸປະກອນທີ່ໃຊ້ໃນການເພາະຊຳ ຫລືອາດຈະເວົ້າໄດ້ວ່າ ວັດຖຸ ແລະ ອຸປະກອນທີ່ຈຳເປັນຕ້ອງໃຊ້ໃນການເຮັດສວນກໍ່ໄດ້ເພາະສ່ວນຫລາຍເຄື່ອງມື ອາດພິຈາລະນາໄດ້ຕາມຂະໜາດ ແລະ ຈຸດປະສົງຂອງວຽກ. ວັດຖຸອຸປະກອນບາງຢ່າງຕໍ່ໄປນີ້ ອາດມີໄວ້ໃຊ້ກໍ່ໄດ້ ຫລື ອາດບໍ່ຈຳເປັນກໍ່ໄດ້ ໃນວຽກເພາະຊຳມີຄວາມຈຳເປັນຕ້ອງໃຊ້ອຸປະກອນດັ່ງຕໍ່ໄປນີ້:

1. ອຸປະກອນໃນການຕຽມດິນ: ຄືເຄື່ອງມື ແລະ ອຸປະກອນຕ່າງໆ ທີ່ກ່ຽວກັບການຕຽມດິນປູກທີ່ໃຊ້ໃນການປັກຊຳອາດມີ ສຽມ, ຄາດ, ຊ້ອມພວນດິນ, ຕະເຂີງຮ່ອນດິນ, ຊ້ວານ.

2. ອຸປະກອນໃນການປູກ: ມີເຄື່ອງມືກະໄລຍະປູກ, ເຄື່ອງມືເຮັດຮ່ອງຫ່ວານເມັດໃນ ການກະໄລຍະປັກຊຳ ແລະ ມີດຕິດຕາຕໍ່ກິ່ງ.

3. ອຸປະກອນການໃຫ້ນ້ຳ : ບົວຫົດນ້ຳ, ຄຸ ແລະ ອື່ນໆ ນອກນີ້ມີເຄື່ອງພົ່ນນ້ຳແບບເປັນຝອຍ.

4. ອຸປະກອນໃນການບົວລະບັດຮັກສາ : ມີເຄື່ອງຕັດແຕ່ງກິ່ງ, ມີດຕັດຊະນິດຕ່າງໆ, ເຄື່ອງພົ່ນຢາຂ້າແມງໄມ້ສັດຕູພືດ.

5. ວັດສະດຸທີ່ໃຊ້ໃນການເພາະປູກຫລືການປັກຊຳຕ່າງໆ : ກໍ່ຄືດິນທີ່ໃຊ້ປູກເຊິ່ງຕ້ອງເປັນດິນ ທີ່ປະສົມ ຂຶ້ນຕາມສ່ວນຕ່າງໆທີ່ບໍ່ຄືກັນ ແລ້ວແຕ່ຊະນິດຂອງພັນໄມ້ ແລະວິທີປັກຊຳນັ້ນ. ແຕ່ ເຄື່ອງທີ່ໃຊ້ປູກດັ່ງຕໍ່ໄປນີ້ຕ້ອງໃຊ້ຢູ່ສະເໝີ ຄື : ດິນທຳມະດາ, ຊາຍແກ່ ຫລືຊາຍລະອຽດ, ເສດໃບໄມ້ຜຸ ຫລື ຝຸ່ນບົ່ມ ພວກອິນຊີວັດຖຸ, ຂີ້ເຖົ່າແກບ, ຂີ້ເລື່ອຍ, ກາບໝາກພ້າວ ຫລືຈຳພວກຫຍ້າ.

6. ດິນ : ໄມ້ດອກ-ໄມ້ປະດັບສາມາດເຕີບໂຕໄດ້ໃນດິນເກືອບທຸກຊະນິດແຕ່ບໍ່ຄວນເປັນດິນທີ່ວ່າໜຽວຫລາຍ ຫລື ຊາຍຫລາຍ ເພາະໄມ້ດອກຈະບໍ່ຈະເລີນເຕີບໂຕໄດ້ດີ ເນື່ອງຈາກວ່າພືດ ພວກໄມ້ດອກ-ໄມ້ປະດັບມີລະບົບຮາກທີ່ບໍ່ສາມາດຈະເລີນເຕີບໂຕໄດ້ໃນດິນດັ່ງກ່າວ. ດິນໜຽວຫລາຍ ກໍຍ່ອມມີການລະບາຍນ້ຳບໍ່ໄດ້ດີ ເຊິ່ງເປັນເຫດໃຫ້ ອາກາດໃນດິນມີໜ້ອຍ. ດັ່ງນັ້ນ, ສະພາບຂອງດິນທີ່ເໝາະສົມໃນການປູກໂດຍສະເພາະເພື່ອການຄ້າຕ້ອງເປັນ ດິນຜຸຜຸ່ຍ, ມີອິນຊີວັດຖຸ ແລະ ມີການລະບາຍອາກາດ ແລະ ນ້ຳເມື່ອຝົນຕົກຫລາຍ ນ້ຳກໍຈະບໍ່ຂັງ.

### 4.2.2 ຝຸ່ນຄອກ

ໄດ້ມາຈາກອາຈົມ ແລະ ປັດສະວະຂອງສັດມີທາດອາຫານຫລາຍຊະນິດແຕ່ປະລິມານນ້ອຍ, ຄຸນຄ່າຂອງຝຸ່ນຄອກຂຶ້ນຢູ່ກັບຊະນິດ ແລະ ອາຍຸຂອງສັດ ອາຫານທີ່ໃຊ້ລ້ຽງ ແລະ ການເກັບຮັກສາ ການໃສ່ຝຸ່ນຄອກບໍ່ຄວນໃສ່ຝຸ່ນສົດ ເຊິ່ງວ່າທາດອາຫານຈະສູງກ່ວາເພາະມັນເປັນອັນຕະລາຍຕໍ່ຮາກພືດ. ການໃຊ້ຝຸ່ນຄອກທີ່ສະຫລາຍຕົວດີແລ້ວຈະຊ່ວຍເພີ່ມອິນຊີວັດຖຸໃນດິນ, ຊ່ວຍປັບປຸງຄຸນສົມບັດທາງກະຍະພາບຂອງດິນໃຫ້ດີຂຶ້ນ ແລະ ເພີ່ມຈຸລິນຊີ ເຊິ່ງຊ່ວຍຍ່ອຍອາຫານໃຫ້ພືດ ການເກັບຮັກສາຝຸ່ນຄອກຄວນໃຊ້ເຟືອງ, ຂີ້ເລື່ອຍ ຫລື ຂີ້ແກບຮອງມູນສັດ ແລະ ປັດສະວະສັດ ເພື່ອດູດຊັບຂອງສ່ວນຂອງຝຸ່ນທີ່ລະລາຍໃນນ້ຳໄວ້ບໍ່ໃຫ້ສູນຫາຍໄປ. ຄວນກອງຝຸ່ນຄອກໃຫ້ແໜ້ນ, ບໍ່ໃຫ້ອາກາດຖ່າຍເທໄດ້ສະດວກ ຈຸລິນຊີຈະຊ່ວຍຍ່ອຍສະຫລາຍຕົວໃຫ້ໄວຂຶ້ນ.

### 4.2.3 ສານອະນົນຊີ

ໝາຍເຖິງຝຸ່ນເຊິ່ງມີແຫ່ລງປະກອບມາຈາກສານອະນົນຊີຕ່າງໆ ຫລື ສັງເຄາະຂຶ້ນມາ ໂດຍຂະບວນການທາງເຄມີ ມັກນິຍົມເອີ້ນກັນວ່າ: ຝຸ່ນເຄມີ ຫລື ຝຸ່ນວິທະຍາສາດ. ຝຸ່ນເຄມີອາດ ແບ່ງ ອອກເປັນຫລາຍປະເພດ ເຊັ່ນ:

1. ຝຸ່ນດ່ຽວ : ໃຫ້ທາດອາຫານຊະນິດດຽວ ເຊັ່ນ: ຢູເຣຍ (Urea) ຫລື ໄນໂຕຼເຈນ 46%. (Nitrogen); ຝຸ່ນຊູບເປີຟົສເຟດ (Superphosphorate); ຟົສຟໍຣັສ 20% (Phosphor ate), ຝຸ່ນໂປແທສຊຽມຊັນເຟດ (Potassium sulfur); ໂພແທສຊຽມ 60% (Potassium) ຝຸ່ນດ່ຽວມີຄວາມເຂັ້ມຂຸ້ນສູງຫລາຍ ແລະ ລະລາຍນ້ຳໄດ້ດີ.

2. ຝຸ່ນປະສົມ: ໄດ້ຈາກການເອົາຝຸ່ນດ່ຽວມາປະສົມກັນ ເຊັ່ນ : N P K ສູດ 10. 10. 10 ໝາຍຄວາມວ່າຝຸ່ນນີ້ 100 ກິໂລກຣາມ ມີໄນໂຕຣເຈນທີ່ພືດສາມາດນຳໄປໃຊ້ໄດ້ 10 ກິໂລກຣາມ ມີຟົສຟໍຣັສ ທີ່ພືດສາມາດນຳໄປໃຊ້ໄດ້ 10 ກິໂລກຣາມ ແລະ ມີ ໂປແທສຊຽມທີ່ພືດສາມາດນຳໄປໃຊ້ໄດ້10 ກິໂລກຣາມ.

### 4.2.4 ການນຳໃຊ້ຝຸ່ນຄອກ, ຝຸ່ນບົ່ມ

ສາມາດນຳໃຊ້ໄດ້ 2 ລັກສະນະຄື:

1. ໃຊ້ເປັນຝຸ່ນ : ຝຸ່ນຄອກ, ຝຸ່ນບົ່ມຈະມີທາດອາຫານຢູ່ນ້ອຍ ແຕ່ສາມາດນຳໃຊ້ເປັນອາຫານຂອງພືດໄດ້ດົນນານ. ນອກນີ້ຍັງໃຫ້ທາດອາຫານໄດ້ຫຼາຍທາດພໍສົມຄວນ.

2. ໃຊ້ປະສົມດິນປູກໄມ້ດອກ-ໄມ້ປະດັບໃນກະຖັງ ແລະ ຖົງຢາງ: ຝຸ່ນຄອກ, ຝຸ່ນບົ່ມ ທີ່ນຳມາປະສົມຄວນເປັນຝຸ່ນເກົ່າ 1 ສ່ວນ ຫາກເປັນໄປໄດ້ຄວນເປັນໃບໄຜ່ ຫຼື ໃບສາມສາ, ດິນ 1 ສ່ວນ ຫຼື ຝຸ່ນບົ່ມ 1 ສ່ວນ ຄວນເປັນດິນແຄມນ້ຳ ຫຼື ດິນໂນນປວກ, ກາບໝາກພ້າວສັບ ຫຼື ຂຸ່ຍໝາກພ້າວ 1 ສ່ວນ, ຖ້າດິນທີ່ເປັນດິນກົດສູງຄວນໃຊ້ປູນຂາວ 2 ກິໂລ / ດິນ 100 ກິໂລ.ໃນສ່ວນຂອງໃບໄມ້ໃນທາງການຄ້າປະຈຸບັນເພິ່ນນິຍົມເອົາຫຍ້າຄາຕັດປະມານ 1 ນິ້ວ ມາປະສົມດິນ

ໃນກະຖົງປູກ ເພາະຫຍ້າຄາມັນບໍ່ເນົ່າເປື່ອຍງ່າຍ ຈຶ່ງເຮັດໃຫ້ໂຄງສ້າງຂອງດິນໂປ່ງຈຶ່ງສາມາດເຮັດໃຫ້ຕົ້ນໄມ້ໃນກະຖົງມີອາຍຸຍືນຍາວກ່ວາປົກກະຕິ ໂດຍບໍ່ຕ້ອງປ່ຽນດິນປູກກໍໄດ້.

**4.2.5 ການນຳໃຊ້ນ້ຳສະກັດຊີວະພາບເຂົ້າໃນການປູກ ແລະ ຂະຫຍາຍພັນ**

1. ນ້ຳສະກັດຊີວະພາບສຳລັບການປູກ

- ສະກັດຊີວະພາບສູດທຳມະດາ: ໄດ້ມາຈາກການບົ່ມພືດຜັກ ກັບນ້ຳຕານໃນອັດຕາສ່ວນ 1 / 1 ນຳໃຊ້ເປັນສູດບຳລຸງຕົ້ນໄມ້ ແລະ ໃບ.

- ນ້ຳສະກັດຊີວະພາບສູດເຂັ້ມຂຸ້ນ : ໄດ້ມາຈາກການບົ່ມຫອຍປາກກ້ວາງ, ປາ, ຊີ້ນສັດ ກັບນ້ຳຕານ 1/1 ເປັນສູດໃຊ້ເລັ່ງການຈະເລີນເຕີບໂຕ ຫຼື ການເກັບກ່ຽວ.

- ນ້ຳສະກັດຊີວະພາບສູດເລັ່ງ : ການອອກຕາດອກ, ຈັບໝາກ, ປ້ອງກັນດອກໝາກລົ່ນ, ໄດ້ຈາກການບົ່ມໝາກຮຸ່ງສຸກ 1 ສ່ວນ, ໝາກອຶແກ່ 1 ສ່ວນ, ກ້ວຍນ້ຳສຸກ 1 ສ່ວນ ແລະ ກາກນ້ຳຕານ 1 ສ່ວນ ໃຊ້ສີດໃນຊ່ວງໃບໄມ້ແກ່ຈັດພ້ອມທີ່ຈະເກີດຕາດອກ, ຊຶ່ງເປັນຊ່ວງດອກບານ ແລະ ເປັນໝາກນ້ອຍ.

- ຝຸ່ນບົ່ມຊີວະພາບ : ໃຊ້ເປັນຝຸ່ນບຳລຸງດິນໃຊ້ເດືອນລະ 1 ເທື່ອເວລາໃສ່ຄວນຫົດນ້ຳ ແລະ ຄຸ້ມດິນດ້ວຍເຟືອງ ຫຼືຫຍ້າແຫ້ງ.

2. ການຂະຫຍາຍພັນ

- ການປະສົມພັນແບບໃຊ້ເພດ : ແນະນຳໃຫ້ແຊ່ແກ່ນໄມ້ດອກ-ໄມ້ປະດັບ ລົງໃນນ້ຳສະກັດຊີວະພາບ 1-2 ບ່ວງແກງ ຕໍ່ ນ້ຳ 2 ລິດ ເຊັ່ນ: ດອກດາວເຮືອງແຊ່ນ້ຳປະມານ 10 - 15 ນາທີ, ດອກຕາເວັນປະມານ 1-2 ຊົ່ວໂມງ, ໄມ້ປະດັບ 24 ຊົ່ວໂມງ.

- ການຂະຫຍາຍພັນບໍ່ໃຊ້ເພດ : ໂດຍສະເພາະແມ່ນການປັກຊຳແມ່ນນິຍົມໃຊ້ສູດທີ 1 ນ້ຳສະກັດຊີວະພາບ 1 ບ່ວງແກງຕໍ່ນ້ຳ 10 ລິດ, ໃຊ້ສີດຕົ້ນໄມ້ທີ່ຈະນຳໄປປັກຊຳອາທິດ ລະ 2 ເທື່ອ ປະມານ 2 ອາທິດ ເພື່ອກະຕຸ້ນໃຫ້ງ່າຈະເລີນເຕີບໂຕໄດ້ດີ. ຫຼັງຈາກນັ້ນຈຶ່ງຕັດເອົາງ່າມາແຊ່ນ້ຳສະກັດຊີວະພາບ 1 ຊົ່ວໂມງ ຈຶ່ງເອົາໄປປັກຊຳໄດ້, ຮາກກໍຈະຂະຫຍາຍຕົວໄວ.

# ບົດທີດສະດີ 5
# ການຂະຫຍາຍພັນໄມ້ດອກ-ໄມ້ປະດັບ

| |
|---|
| **ຈຸດປະສົງການສອນ** |
| 1. ເຂົ້າໃຈກການຂະຫຍາຍພັນໄມ້ດອກ-ໄມ້ປະດັບ |
| 2. ເຂົ້າໃຈການຂະຫຍາຍພັນໄມ້ໃບ-ໄມ້ປະດັບ |

## ເນື້ອໃນ

### 5.1 ການຂະຫຍາຍພັນໄມ້ດອກ-ໄມ້ປະດັບ

ການຂະຫຍາຍພັນຄື: ການເພີ່ມຈຳນວນຕົ້ນຂອງພືດ. ສຳລັບໄມ້ດອກນິຍົມກັນຂະຫຍາຍພັນດ້ວຍເມັດ ແລະ ການປັກຊຳສ່ວນຕ່າງໆຂອງລຳຕົ້ນ ເຊິ່ງມີ ຢູ່ 2 ວິທີ ຄື:

#### 5.1.1 ການຂະຫຍາຍພັນແບບໃຊ້ເພດ

ກໍ່ຄືການຂະຫຍາຍພັນດ້ວຍເມັດເປັນວິທີທີ່ເຮັດໄດ້ງ່າຍແຕ່ຜູ້ປູກຕ້ອງຮູ້ວ່າຖ້າເກັບເມັດ ໄປປູກໂດຍບໍ່ຮູ້ຈັກເລືອກ, ຕົ້ນໃໝ່ທີ່ໄດ້ມັກຈະບໍ່ຄືງລັກສະນະດີເດັ່ນຂອງຕົ້ນແມ່ໄວ້ ເນື່ອງຈາກເມັດໄດ້ຈາກການປະສົມພັນເກສອນຜູ້ ແລະ ເກສອນຕົວແມ່ ເຊິ່ງຕ່າງກໍ່ມີຢີນຄວບຄຸມລັກສະນະຈຳນວນຫລາຍດ້ວຍກັນເມື່ອຈັບຄູ່ກັນໃໝ່ ຈຶ່ງເຮັດໃຫ້ໄດ້ລັກສະນະທີ່ບໍ່ເໝືອນເດີມ ເຮົາເອີ້ນວ່າ ການກາຍພັນ ແລະ ມັກຈະກາຍໄປທາງຮ້າຍກ່ວາຕົ້ນແມ່.

#### 5.1.2 ການຈະຫຍາຍພັນແບບບໍ່ໃຊ້ເພດ

ການຂະຫຍາຍພັນໂດຍການໃຊ້ສ່ວນຕ່າງໆຂອງລຳຕົ້ນເຮັດໄດ້ສຳເລັດເພາະພືດມີຄວາມສາມາດທີ່ຈະສ້າງສ່ວນທີ່ຂາດນັ້ນຂຶ້ນມາມາເພື່ອໃຫ້ໄດ້ຕົ້ນໃໝ່ຄືພືດຕົ້ນໜຶ່ງປະກອບດ້ວຍຕົ້ນ ແລະ ຮາກ, ເຮົາສາມາດຕັດກິ່ງມາຊຳແລ້ວໄດ້ຮາກໃໝ່ ຖ້າຕັດຮາກໄປຊຳຕາທີ່ທ່ອນສາມາດເກີດເປັນຕົ້ນໃໝ່ ຫລື ເມື່ອຕັດໃບມາຊຳສາມາດໄດ້ທັງຕົ້ນ ແລະ ຮາກໃໝ່ ແຕ່ທັງນີ້ພືດມີຄວາມສາມາດໃນການສ້າງສ່ວນທີ່ຂາດມາທົດແທນໄດ້ຕ່າງກັນ. ພືດບາງຊະນິດເທົ່ານັ້ນທີ່ສາມາດຂະຫຍາຍພັນດ້ວຍການປັກຊຳ ເຊັ່ນ: ດອກເຈັ້ຍປັກຊຳກິ່ງແກ່ໄດ້ຕົ້ນໃໝ່ ໂດຍໃຊ້ ເວລາບໍ່ດົນນານ ແຕ່ດອກເຈ້ຍບໍ່ສາມາດຈະປັກຊຳດ້ວຍໃບໄດ້ ໃນຂະນະໄມ້ດອກບາງຊະນິດສາມາດເກີດຕົ້ນໃໝ່ດ້ວຍການຊຳໃບ ເຊັ່ນ: ແອຟຣິກັນ, ໄວໂອເລັດ, ກຣອກຊີເນຍ. ການຮູ້ຈັກ ຊະນິດຂອງພືດ ແລະ ວິທີສ ເພາະໃນການຂະຫຍາຍພັນພືດນັ້ນໆ ຈຶ່ງມີປະໂຫຍດຫລາຍ.

### 5.2 ການຂະຫຍາຍພັນໄມ້ໃບ-ໄມ້ປະດັບ

ການຂະຫຍາຍພັນໄມ້ໃບ-ໄມ້ປະດັບ ບໍ່ນິຍົມຂະຫຍາຍພັນໂດຍການໃຊ້ເພດ ແລະ ບໍ່ໃຊ້ເພດເໝືອນກັບໄມ້ດອກອື່ນໆ ແຕ່ວ່າຈະໃຊ້ວິທີໃດນັ້ນແມ່ນຂຶ້ນກັບຄວາມເໝາະສົມຂອງ ພັນໄມ້

ແຕ່ລະຊະນິດ ເຊິ່ງຈະມີລະອຽດດັ່ງຕໍ່ໄປນີ້

### 5.2.1 ການຂະຫຍາຍພັນແບບໃຊ້ເພດ (ໄມ້ໃບ-ໄມ້ປະດັບ)

ໄມ້ໃບ-ໄມ້ປະດັບກໍ່ແມ່ນພັນໄມ້ຊະນິດໜຶ່ງທີ່ສາມາດຂະຫຍາຍພັນດ້ວຍວິທີຜ່ານຂະບວນການທາງເພດ ເຊິ່ງກໍ່ມີພັນໄມ້ໃບ-ໄມ້ປະດັບຫລາຍຊະນິດທີ່ນິຍົມຂະຫຍາຍພັນດ້ວຍການໃຊ້ເມັດ ເຊິ່ງພິຈາລະນາຕາມລັກສະນະພັນໄມ້ທີ່ເໝາະສົມ ເຊັ່ນ : ຕົ້ນຄູນເຫລືອງ, ຫາງນົກຍູງ, ແຄຝະລັ່ງ, ຫູກວາງ, ວາດສະໜາ ແລະ ໂກສົນ.

1. ວາດສະໜາ : ເປັນພັນໄມ້ທີ່ອີ່ມນໍ້າ, ເປັນໄມ້ປະດັບທີ່ປູກກາງແຈ້ງ ມັກປູກຕາມຂອບສະໜາມຫຍ້າ, ແຄມນໍ້າຫລືມຸມອາຄານ, ເປັນພັນໄມ້ເມືອງຮ້ອນມັກບ່ອນແຫ້ງແລ້ງຈຶ່ງມີຖິ່ນກໍາເນີດຈາກທະເລຊາຍ, ບາງຊະນິດຕົ້ນຈະຕາຍເມື່ອອອກດອກແລ້ວ. ການຂະຫຍາຍພັນທົ່ວໆໄປ ສາມາດຂະຫຍາຍພັນດ້ວຍການໃຊ້ໜໍ່ທີ່ແຕກອອກມາຈາກກໍ. ນອກຈາກນີ້, ອາດຈະໃຊ້ເມັດກ້າໃນດິນຊາຍກໍໄດ້ ເຊິ່ງຈະເຮັດໃຫ້ຈໍານວນແນວພັນຫລາຍຂຶ້ນ.

2. ຫາງນົກຍູງ : ເມື່ອຫາງນົກຍູງອອກດອກ ແລະ ບານປະມານ 1 ອາທິດດອກກໍ່ຈະຖືກປະສົມ ແລະ ລິ່ມເຕັມກ້ອງຕົ້ນເປັນສີແດງ, ເຫລືອງ ຫລື ແສດ ຕໍ່ຈາກນັ້ນກໍ່ຈະກາຍເປັນຝັກ ລັກສະນະຍາວ ເໝືອນຝັກດາບ ກ້ວາງປະມານ 3 ນີ້ວ ແລະ ຍາວປະມານ 14-17 ນີ້ວ. ໃນຝັກມີເມັດແຂງ ເມື່ອນໍາມາປູກຈະເກີດງ່າຍ ແລະ ໃຊ້ເມັດເປັນສ່ວນຂະຫຍາຍພັນ ເພາະເຕີບໂຕໄວ.

### 5.2.2 ການຂະຫຍາຍພັນແບບບໍ່ໃຊ້ເພດ (ໄມ້ໃບ-ໄມ້ປະດັບ)

ໄມ້ໃບ-ໄມ້ປະດັບ ທີ່ນິຍົມກັນຂະຫຍາຍພັນໂດຍການໃຊ້ສິ້ນສ່ວນຕ່າງໆຂອງລໍາຕົ້ນ ເພາະພືດສາມາດທີ່ຈະປົ່ງນ ຫລືຈະສ້າງສ່ວນທີ່ຂາດນັ້ນມາເພື່ອໃຫ້ໄດ້ໂຕໃໝ່ ເຊັ່ນ: ສາວນ້ອຍປະແປ້ງ, ໂກສົນ, ໝາກຜູ້ ໝາກແມ່ ແລະ ອື່ນໆ ເຊັ່ນ:

1. ການຂະຫຍາຍພັນ:

- ສາວນ້ອຍປະແປ້ງ: ວິທີ ທີ່ງ່າຍ ແລະນິຍົມກັນ ຄື : ການປັກຊໍາໂດຍຕັດລໍາຕົ້ນທີ່ແກ່ໆ ເປັນທ່ອນໆຍາວປະມານ 2 ນີ້ວ ໃຫ້ມີຕາຕິດມານໍາດ້ວຍ ທຸກທ່ອນທີ່ຕັດອອກ ແລະ ໃຊ້ ວາງລົງຕາມຍາວຂອງທ່ອນພັນໃນຮາງດິນຊາຍ, ຫົດນໍາໃຫ້ຊຸ່ມ ແຕ່ບໍ່ໃຫ້ຊຸ່ມເກີນໄປເພາະຈະເຮັດໃຫ້ເໜົ່າງ່າຍທີ່ສຸດ. ຖ້າໃຫ້ນໍ້າສະໝໍ່າສະເໝີ ບໍ່ເຖິງນານຕາ ທີ່ຕິດຢູ່ກັບ ທ່ອນພັນກໍ່ຈະແຕກຍອດພ້ອມດ້ວຍຮາກ. ສ່ວນການຂະຫຍາຍພັນອີກວິທີໜຶ່ງ ທີ່ຈະເຮັດໃຫ້ໄດ້ຕົ້ນງາມ ແລະ ເຕີບໂຕໄວ ຄື : ການໂຫມຍອດເມື່ອຮາກອອກກໍ່ຈະຕັດ ຍອດມາປູກເລີຍ.

- ໂກສົນ : ສາມາດຂະຫຍາຍພັນໄດ້ງ່າຍທີ່ສຸດຄື: ການຕອນຍອດ ຫລື ໂຫມກິ່ງ ໂດຍການຕອນວິທີທໍາມະດາ ເຊັ່ນດຽວກັບການຕອນກຸຫລາບ ຫລືຕອນພັນໄມ້ທົ່ວໆໄປ. ການປັກຊໍາກິ່ງນັ້ນອາດໃຊ້ກັບໂກສົນທີ່ມີປະລິມານຫລາຍ ເພາະວ່າການປັກຊໍານັ້ນອາດບໍ່ໄດ້ຜົນດີແນ່ນອນເທົ່າກັບການໂຫມ. ບາງຊະນິດມັກນິຍົມນໍາເອົາກິ່ງໂກສົນມາຊໍານໍ້າ ໃນກວດ

ແກ້ວໃຫ້ແຕກຮາກກ່ອນ ຈຶ່ງນຳໄປປູກ, ກິ່ງປັກຊຳຄວນຕັດຍາວ ປະມານ 10-15 ຊັງຕີແມັດ ຊຳວິທີດຽວກັນກັບຊຳຕົ້ນໄມ້ອື່ນໆ.

- ໝາກຜູ້ໝາກແມ່ : ຂະຫຍາຍພັນໄດ້ງ່າຍ ໂດຍການປັກຊຳກິ່ງ ຫລື ໂຫມຍອດ 2-3 ອາທິດ ກໍ່ແຕກຮາກຢູ່ຮອບກິ່ງ. ຖ້າໃຊ້ກິ່ງປັກຊຳໃຫ້ຕັດຕົ້ນ ຫລືກິ່ງເປັນທ່ອນ ຍາວ ປະມານ 8-10 ຊັງຕີແມັດ ປັກລົງໃນຮາງໄມ້ຊົ່ວຄາວ ຫລືຂີ້ເທົ່າແກບກໍ່ໄດ້ ຖ້າຫາກຈະໃຊ້ ວິທີຂະຫຍາຍພັນໂດຍການແບ່ງກໍ່ອາດເຮັດໄດ້.

# ບົດທົດສະດີທີ 6
# ການປູກໄມ້ດອກ-ໄມ້ປະດັບບາງຊະນິດ

**ຈຸດປະສົງການສອນ**

1. ອະທິບາຍ ຄວາມສຳຄັນຂອງກຸຫລາບ
2. ອະທິບາຍ ການປູກໄມ້ດອກ-ໄມ້ປະດັບ
3. ອະທິບາຍ ການປູກໄມ້ປະດັບ.

## ເນື້ອໃນ

### 6.1 ການປູກກຸຫລາບ

#### 6.1.1 ລັກສະນະທົ່ວໄປຂອງກຸຫລາບ

ກຸຫລາບມີຊື່ສາມັນວ່າ: Rose ຊື່ທາງວິທະຍາສາດ Rose Hybrida ຢູ່ໃນຕະກຸນ Family Roseceae ເຊິ່ງມີພັນຢູ່ໃນຕະກຸນນີ້ ເຖິງ 115 ຕະກຸນ ແລະ ປະກອບດ້ວຍຊະນິດ ຕ່າງໆ ປະມານ 3.200 ຊະນິດ. ກຸຫລາບເປັນປະເພດໄມ້ພຸ່ມ, ມີລັກສະນະຂອງລຳຕົ້ນຊື່ ແລະ ຕ່ຳ ສ່ວນລຳຕົ້ນກິ່ງກ້ານມີໜາມແຫລມຄົມ ໃບສ່ວນຫລາຍເປັນໃບລວມ ແຕກອອກຈາກກິ່ງມີລັກສະນະຮຽງກັນ ດອກທີ່ອອກມີທັງດອກດ່ຽວ ແລະ ດອກຊໍ່ ແຕ່ລະດອກມີທັງເກສອນຜູ້ ແລະ ເກສອນແມ່ໃນດອກດຽວກັນ.

#### 6.1.2 ປະເພດກຸຫລາບ

ກຸຫລາບສາມາດແຍກປະເພດອອກໄດ້ຕາມລັກສະນະການຈະເລີນເຕີບໂຕ:

1. ກຸຫລາບຕັດດອກ (Hybridtea) ປະຈຸບັນກຸລາບປະເພດນີ້ນິຍົມກັນປູກໃນທົ່ວໂລກ ປົກກະຕິມັນຈະອອກດອກມີຫລາຍສີ, ກ້ານດອກຍາວ, ອອກດອກຕະຫລອດປີ ມີຫລາຍພັນບາງພັນມີຊົງພຸ່ມຕ່ຳ ແລະ ບາງພັນມີຊົງພຸ່ມສູງ ສ່ວນຫລາຍທີ່ຂາຍໃນທ້ອງຕະຫລາດມັກຈະ ແມ່ນ ກຸຫລາບ ປະເພດນີ້.

2. ກຸຫລາບພວງ (Flovibunda) ອອກດອກເປັນຊໍ່, ຊໍ່ໜຶ່ງມີຫລາຍດອກ ແລະ ບານພ້ອມກັນ, ຂະໜາດຂອງດອກນ້ອຍ, ສີຂອງດອກມີຫລາຍສີ ແລະ ອອກດອກຕະຫລອດປີ. ຕົ້ນເປັນພຸ່ມຕັ້ງຊື່ສູງປະມານ 50-100 ຊັງຕີແມັດ ໃຊ້ປູກໃນແປງໄດ້ດີ. ກຸຫລາບຢູ່ໃນຕະກຸນນີ້ສາມາດທົນທານ ຕໍ່ສະພາບແວດລ້ອມ, ເຊື້ອພະຍາດ ແລະ ແມງໄມ້ໄດ້.

3. ກຸຫລາບໜູ (Maniature) ມີລັກສະນະເປັນຕົ້ນພຸ່ມນ້ອຍສູງປະມານ 30-35 ຊັງຕີແມັດ ອອກດອກເປັນພວງ, ດອກມີຂະໜາດນ້ອຍ, ນິຍົມປູກປະດັບໜານ ແລະ ປູກໃນໂຖນ້ອຍ ເພື່ອໄວ້ເບິ່ງໃນຍາມອອກດອກ.

4. ກຸຫລາບ Gramdifora: ເປັນລູກປະສົມລະຫ່ວາງກຸຫລາບພວງ ແລະ ກຸ

ຫລາບຕັດດອກ ມີລັກສະນະດອກເປັນດອກດ່ຽວ ແຕ່ມີຂະໜາດນ້ອຍກ່ວາກຸຫລາບອື່ນໆ, ກ້ານຍາວ ລຳຕົ້ນສູງແຂງແຮງ ສາມາດທົນທານຕໍ່ສະພາບແວດລ້ອມ ແລະ ພະຍາດແມງໄມ້ໄດ້.

5. ກຸຫລາບພຸ່ມ (Shrub): ຕາມປົກກະຕິກຸຫລາບພວກນີ້ ມີການຈະເລີນເຕີບໂຕເປັນພຸ່ມ ບໍ່ຄ່ອຍສູງຫລາຍ ກິ່ງຈະແຕກອອກຈາກສ່ວນລຸ່ມຂອງລຳຕົ້ນ ແລະ ຈະເລີນຂຶ້ນເປັນພຸ່ມ ກິ່ງໜຶ່ງອາດອອກດອກພຽງດອກດຽວ ຫລືຈະອອກ 3-5 ດອກຕໍ່ກິ່ງ ດອກມີຂະໜາດນ້ອຍ ແລະ ມັກມີກີບດອກຊັ້ນດຽວ.

6. ກຸຫລາບ Ramble: ກຸຫລາບພວກນີ້ມີລັກສະນະລຳຕົ້ນຍາວ ແລະ ອ່ອນໂຄ້ງອອກດອກ ເປັນພວງ, ດອກມີຂະໜາດນ້ອຍ, ດອກບໍ່ຫລາຍ ແລະ ເວລາອອກດອກມີກິ່ນຫອມ.

### 6.1.3 ການຂະຫຍາຍພັນ

ກຸຫລາບສາມາດຂະຫຍາຍພັນໄດ້ງ່າຍກ່ວາໄມ້ດອກຊະນິດອື່ນໆ ແລະ ສາມາດຂະຫຍາຍພັນໄດ້ຫລາຍວິທີ ເຊັ່ນ: ປັກຊຳ, ຕິດຕາ ແລະ ການໂຫມ.ນອກຈາກທີ່ກ່າວມານີ້ແລ້ວຍັງ ມີອີກວິທີໜຶ່ງທີ່ສາມາດຂະຫຍາຍພັນໄດ້ ແຕ່ຂ້ອນຂ້າງຫຍຸ້ງຍາກ ມີຫລາຍຂັ້ນຕອນ ຜູ້ທີ່ທຳການຂະຫຍາຍພັນມີຈຸດມຸ້ງໝາຍພຽງຢ່າງດຽວນັ້ນຄື: ຕ້ອງການໃຫ້ໄດ້ພັນກຸຫລາບພັນໃໝ່ເກີດຂຶ້ນ ວິທີດັ່ງກ່າວຄື: ການກ້າເມັດ .

1. ການໂຫມ : ສຳລັບວິທີການໂຫມຖ້າບໍລິເວນທີ່ຈະໂຫມ ມີໜາມໃຫ້ປິດໜາມອອກໃຫ້ໝົດ ເພື່ອສະດວກໃນການປະຕິບັດແລ້ວໃຊ້ມີດຫັ່ນຮອບກິ່ງ 2 ຮອບຫ່າງກັນປະມານ 1/2-2.5 ຊັງຕີແມັດ ໄລຍະ ຫ່າງຂອງຮອຍ ຂຶ້ນຢູ່ກັບຂະໜາດຂອງກິ່ງ ເມື່ອຫັ່ນແລ້ວໃຊ້ມີດຂີດເປືອກແລ້ວລອກເປືອກອອກໃຊ້ສັນມີດຂູດເນື້ອເຍື່ອຮອບໆກິ່ງອອກໃຫ້ໝົດ ນຳຍອງພ້າວທີ່ແຊ່ນ້ຳອີ່ມຕົວຫຸ້ມບ່ອນຮອຍຫັ່ນ ແລ້ວໃຊ້ຖົງຢາງຫຸ້ມອີກເທື່ອໜຶ່ງ ມັດດ້ວຍເຊືອກຟາງບໍລິເວນຫົວ ແລະ ທ້າຍຂອງຍອງພ້າວໃຫ້ແໜ້ນ. ການນຳເອົາແຜ່ນຢາງຫໍ່ຫຸ້ມເປັນວິທີປ້ອງກັນບໍ່ໃຫ້ນ້ຳລະເຫີຍອອກຈາກກິ່ງໂຫມ. ຫລັງຈາກໂຫມແລ້ວໄລຍະ 2-3 ອາທິດ ກິ່ງໂຫມຈະອອກຮາກໜ້ອຍ ຫລືຫລາຍນັ້ນຂຶ້ນກັບແນວພັນ ເພາະບາງພັນກໍອອກຮາກຍາກ ແລະ ບາງພັນອອກຮາກງ່າຍໃນໄລຍະອອກຮາກໃໝ່ໆ ບໍ່ຄວນຕັດຮາກອອກຈາກຕົ້ນທັນທີເພາະຮາກຍັງມີໜ້ອຍ ເຊິ່ງບໍ່ພຽງພໍໃນການດູດນ້ຳ ແລະ ອາຫານໄປລ້ຽງຖ້າຕັດໃນຊ່ວງນີ້ຈະເຮັດໃຫ້ກິ່ງແຫ່ວແຫ້ງ. ດັ່ງນັ້ນ, ກ່ອນຈະຕັດກິ່ງໂຫມອອກຈາກຕົ້ນແມ່ ຄວນປ່ອຍໃຫ້ຮາກອອກຫລາຍກ່ອນ ແລະ ຄວນໃຫ້ຮາກມີສີນ້ຳຕານ . ຫລັງຈາກຕັດກິ່ງໂຫມອອກແລ້ວ ຄວນນຳໄປຊຳໄວ້ໃນວັດຖຸປັກຊຳ ເພື່ອໃຫ້ກຸຫລາບຕັ້ງຕົວໄດ້ດີເສຍກ່ອນ ຈຶ່ງຄ່ອຍນຳໄປປູກ.

2. ການໃຊ້ກິ່ງປັກຊຳ : ມີຢູ່ 2 ລັກສະນະ ຄື : ກິ່ງອ່ອນ ແລະ ກິ່ງແກ່.

- ການໃຊ້ກິ່ງອ່ອນປັກຊຳ: ກ່ອນຈະມີການຕັດກິ່ງປັກຊຳເຮົາຄວນເລືອກກິ່ງທີ່ມີດອກເລີ່ມບານ ເຊິ່ງມີອາຍຸໄດ້ປະມານເດືອນເຄິ່ງ ຫລືອາດຈະໃຊ້ກິ່ງທີ່ມີອາຍຸນ້ອຍ

ກ່ວານີ້ ຄື ກິ່ງທີ່ມີ ດອກກຳລັງຈູມ ແລະ ບານພາຍໃນ 7 ມື້ ຫລື ໃຊ້ກິ່ງທີ່ດອກບານໄປແລ້ວ ແຕ່ບໍ່ເກີນ 1 ອາທິດ ແລະ ເປັນກິ່ງ ທີ່ຕາຍອດບໍ່ທັນແຕກອອກຈາກກິ່ງ. ປົກກະຕິມັກໃຊ້ກິ່ງຍອດໄປປັກຊຳໄດ້1-3 ທ່ອນ ຫລືກິ່ງຮອງຍອດບາງສ່ວນ ເຊິ່ງບໍ່ທັນແກ່ເກີນໄປ. ກິ່ງທີ່ຕັດອອກມາບໍ່ໃຫ້ເປັນພະຍາດ ໂດຍສະເພາະພະຍາດໃບຈຸດ, ພະຍາດຂີ້ໝ້ຽງ ຫລືຖືກເພ້ຍໄຟດູດກິນ ເພາະຈະເຮັດໃຫ້ໃບແຫ່ວໃນເວລາທີ່ຊຳຢູ່ອາດຈະມີຜົນເຮັດໃຫ້ຮາກບໍ່ເກີດ ຫລືເກີດກໍ່ເກີດນ້ອຍ ແລະ ກິ່ງອາດຈະຕາຍກໍ່ເປັນໄດ້. ສຳລັບຊ່ວງເວລາໃນການຕັດກິ່ງຄວນຕັດໃນຕອນເຊົ້າຫລືຕອນຄ່ຳ ແລະ ກິ່ງຕັດຄວນນຳໄປຈຸ່ມນ້ຳ ຫລື ພົ່ມນ້ຳຕະຫລອດເວລາ ເພື່ອໃຫ້ກິ່ງສົດ. ຂະໜາດຂອງກິ່ງທີ່ໃຊ້ປັກຊຳປະມານ 12-20 ຊັງຕີແມັດ ແລະ ມີໃບຕັ້ງ ແຕ່ 3-5 ໃບ. ເຖິງຢ່າງກໍ່ຕາມ ເມື່ອໃຊ້ກິ່ງທີ່ມີຂະໜາດໃຫຍ່ ແລະ ມີໃບຫລາຍກ່ອນຈະນຳໄປ ປັກຊຳຕ້ອງລິໃບທີ່ກົກກິ່ງ 1-3 ໃບ ແລະປາດຮອຍຕັດດ້ານກົກກິ່ງ ໃຫ້ເປັນປາກປາກສະຫລາມ ເປັນມູມ 45-60 ອົງສາ ໃຊ້ປາຍມີດຂີດກົກກິ່ງຕາມຄວາມຍາວໃຫ້ເປືອກຂາດເຖິງເນື້ອໄມ້ 2 ຮອບກິ່ງກັນຂ້າມກັນແລ້ວນຳໄປຈຸ່ມໃນຮໍໂມນເລັ່ງຮາກ ເຊິ່ງ ເອີ້ນວ່າເຊຣາດິກເບີ 2. ຖ້າຈະໃຊ້ເພື່ອຊ່ວຍເລັ່ງຮາກໃຫ້ອອກໄວຂຶ້ນ. ຫລັງຈາກນັ້ນ, ຈຶ່ງນຳໄປປັກຊຳໄວ້ໃນວັດຖຸທີ່ຕຽມໄວ້ໂດຍໃຫ້ຄວາມເລິກຂອງກິ່ງພໍປະມານ 1/2 ຖ້າໄປປັກຊຳໃນຮາງໄມ້ ຄວນໃຫ້ຫ່າງກັນປະມານ 8x8 ຊັງຕີແມັດ ຫລັງຈາກນັ້ນ ຈຶ່ງຫົດນ້ຳໃຫ້ຊຸ່ມຢູ່ຕະຫລອດເວລາທີ່ໃຊ້ໃນການປັກຊຳປະມານ 2-3 ອາທິດ ກິ່ງຊຳເລີ່ມອອກຮາກ. ຫລັງຈາກນັ້ນ, ຈຶ່ງຍ້າຍໄປຊຳປູກໄວ້ເມື່ອເຫັນວ່າກິ່ງຊຳຈະເລີນເຕີບໂຕແຂງແຮງແລ້ວ ຈຶ່ງຍ້າຍໄປປູກໃນໜານ ຫລືໃນຂຸມປູກອີກໄດ້.

- ໃຊ້ກິ່ງແກ່ປັກຊຳ : ກິ່ງແກ່ທີ່ວ່ານີ້ມີສີນ້ຳຕານອົມຂຽວ , ມີອາຍຸປະມານ 7-12 ເດືອນ ສ່ວນໃຫ່ຍແລ້ວເປັນກິ່ງທີ່ບໍ່ຄ່ອຍມີໃບເຊິ່ງຈຳພວກນີ້ຈະເປັນບ່ອນສະສົມອາຫານພາຍໃນກິ່ງຫລາຍ ເມື່ອນຳໄປຊຳສາມາດທົນຕໍ່ການແຫ່ວແຫ້ງໄດ້ດີ. ການໃຊ້ກິ່ງແກ່ປັກຊຳນີ້ໃຊ້ກັບພວກຕົ້ນຕໍເພື່ອຕິດຕາ ເພາະກຸຫລາບທີ່ເປັນຕົ້ນຕໍ ມີການເຕີບໂຕທົນທານຕໍ່ພະຍາດ ແລະແມງໄມ້ ພ້ອມທັງມີລະບົບຮາກທີ່ດີ. ສຳລັບການຕັດກິ່ງມາປັກຊຳນັ້ນຄວນໃຫ້ຄວາມຍາວ 15-20 ຊັງຕີແມັດ ແລະ ຕັດເປັນມູມ 45-60 ອົງສາ ເມື່ອຕຽມກິ່ງຮຽບຮ້ອຍ ກໍ່ນຳມາປັກຊຳຢູ່ໃນວັດຖຸທີ່ປັກຊຳ ໂດຍປັກໃຫ້ງ່ຽງລົງນ້ອຍໜຶ່ງຢູ່ໃນມູມ 60 ອົງສາ ແລະ ເລິກພໍປະມານ ສ່ວນໄລຍະຫ່າງ 7.5 x7.5 ຊັງຕີແມັດ ເຊັ່ນດຽວກັນກັບກິ່ງອ່ອນ ແລ້ວຫົດນ້ຳໃຫ້ຊຸ່ມ ການຫົດນ້ຳອາທິດທຳອິດຄວນຫົດນ້ຳເຊົ້າແລງ, ອາທິດທີສອງຫົດພຽງເທື່ອດຽວ ຫລືບາງມື້ແລ້ວແຕ່ຄວາມເໝາະສົມ. ຫລັງຈາກຊຳໄດ້ປະມານ 4-6 ອາທິດ ກິ່ງຊຳກໍ່ຈະອອກຮາກ ແລະ ແຕກຍອດ ໃນກໍລະນີທີ່ປັກຊຳໃນຮາງໄມ້ຕ້ອງຍ້າຍໄປຊຳກ່ອນ ເພື່ອໃຫ້ກິ່ງຊຳຕັ້ງຕົວໄດ້ດີ ແລ້ວຈຶ່ງຍ້າຍໄປປູກໃນໜານ.

- ວິທີການຕິດຕາແບບຕົວທີ (T) ເປັນວິທີການແບບໜຶ່ງ ທີ່ໄດ້ພັນດີໃນກຸຫລາບ ວິທີການເຮັດ ແມ່ນຂີດອ້ອມຕົ້ນຕໍເປັນຮູບຕົວທີ (T) ໂດຍຂີດຕົ້ນຕໍຕາມທາງຍາວປະມານ 3-4 ຊັງຕີແມັດ ແລ້ວຂີດທາງຂວາງດ້ານເທິງແລ້ວ ໃຊ້ປາຍມີດແງະເອົາເປືອກອອກທັງສອງຂ້າງ ຈາກນັ້ນກໍ່ໃຊ້ມີດປາດເອົາຕາຂອງກິ່ງພັນດີເປັນຮູບໂລ່ ຫຼືວິງຣີໃຫ້ເທົ່າກັບແຜ່ນຕົ້ນຕໍ ຖ້າແຜ່ນ

ຕາມີເນື້ອໄມ້ຕິດມານຳບໍ່ຕ້ອງແກະກໍ່ໄດ້ແຕ່ຖ້າຕິດມາຫລາຍກໍ່ຄວນແກະອອກ ຢ່າງລະມັດລະວັງ ຢ່າໃຫ້ແຜ່ນຕາຊໍ້າເປັນອັນຂາດ ແລ້ວນຳແຜ່ນຕາສອດເຂົ້າໄປໃນຮອຍແຜຕົ້ນຕໍ ແລ້ວພັນດ້ວຍແຜ່ນຢາງແຕ່ລຸ່ມຂຶ້ນເທິງ ເພື່ອປ້ອງກັນນໍ້າເຂົ້າໃນເວລາຝົນຕົກ. ຫລັງຈາກຕິດຕາ ປະມານ 6-10 ມື້ ຖ້າແຜ່ນຕາຍັງເປັນສີຂຽວ ສະແດງວ່າການຕິດຕາໄດ້ຜົນ ແຕ່ຖ້າເປັນສີນໍ້າຕານ ສະແດງ ວ່າຕານີ້ບໍ່ຕິດ. ໃນກໍລະນີຕິດຕາທີ່ໄດ້ຜົນ ໃຫ້ເປີດແຜ່ນຢາງອອກແລ້ວ ໃຫ້ພັນ ໃໝ່ອີກຄັ້ງໜຶ່ງໂດຍຈົ່ງຕາໄວ້ແລ້ວໃຊ້ມີດບາກກິ່ງເໜືອຮອຍຕິດຕາ ເພື່ອເລັ່ງໃຫ້ຕາຈະເລີນເຕີບໂຕໄວຂຶ້ນ ຈາກນັ້ນປະມານ 2-3 ອາທິດ ຈຶ່ງຄ່ອຍຂີດແຜ່ນຢາງອອກຖິ້ມ.

## 6.2 ການປູກ

ເມື່ອໄດ້ຕົ້ນມາແລ້ວຖ້າຈະປູກແບບງ່າຍໆ ຄືຂຸດຂຸມແລ້ວກໍ່ເອົາຕົ້ນປູກລົງໄປເອົາດິນຖົມແລ້ວຫົດນໍ້າກໍ່ແລ້ວ. ແຕ່ວິທີທີ່ຖືກຕ້ອງ ແລະ ຜົນໄດ້ຮັບກຸ້ມຄ່າຕ້ອງຄຳນຶງເຖິງດິນທີ່ຈະປູກເພາະກຸຫລາບບໍ່ມັກດິນໜຽວ, ແໜ້ນ ແລະ ດິນຊາຍໂພດ ດິນທີ່ປູກຈຶ່ງຕ້ອງລະບາຍນໍ້າດີ. ສະຖານທີ່ທີ່ຈະປຸກຖ້າຫຍ້າເຕີບໂຕໄດ້ດີກໍ່ພໍຈະຄາດໄດ້ວ່າ ດິນບໍລິເວນນັ້ນໃຊ້ໄດ້ຖ້າໄດ້ຮັບການປັບປຸງອີກເລັດນ້ອຍກໍ່ຈະປູກກຸຫລາບໄດ້ດີດ້ວຍ. ຂຸມສຳລັບປູກກຸຫລາບ ຄວນເລິກປະມານ 40-45 ຊັງຕີແມັດ ແລະ ກ້ວາງເທົ່າໆກັນ ເພື່ອໃຫ້ໂອກາດຮາກພືດແຜ່ກະຈາຍໄດ້ເຕັມທີ່ ເມື່ອຕົ້ນໃຫ່ຍຂຶ້ນຖ້າດິນແຂງ ແລະ ລະບາຍນໍ້າບໍ່ໄດ້ດີໃຫ້ຂຸດຂຸມເລິກລົງອີກ ປະມານ 5-8 ຊັງຕີແມັດ ແລ້ວໃສ່ຝຸ່ນລົງໄປທີ່ກົ້ນຂຸມ ເພາະກຸຫລາບບໍ່ມັກໃຫ້ນໍ້າຂັງຮາກ.

### 6.2.1 ການໃຫ້ນໍ້າ

ການໃຫ້ນໍ້າກຸຫລາບ ກໍ່ນັບເປັນເລື່ອງທີ່ສຳຄັນໃນການປູກ ເພາະກຸຫລາບກໍ່ຕ້ອງການນໍ້າຄື ກັນກັບພືດທົ່ວໆໄປ. ກຸຫລາບສ່ວນຫລາຍມັກເກີດພະຍາດໄດ້ງ່າຍໂດຍມີນໍ້າເປັນພາຫະ ໂດຍສະເພາະພະຍາດໃບ ເນື່ອງຈາກການຫົດນໍ້າຖືກໃບຫລາຍເກີນໄປ ການໃຫ້ນໍ້າທີ່ດີກໍ່ຄວນຫົດບ່ອນ ດ້ານກົກຂອງຕົ້ນນັບວ່າດີ ແລະ ປອດໄພ. ການໃຫ້ນໍ້າຫລາຍໃນດິນທີ່ລະບາຍນໍ້າບໍ່ໄດ້ດີກໍ່ເປັນ ອັນຕະລາຍໄດ້. ການໃຫ້ນໍ້າໜ້ອຍບໍ່ພຽງພໍກັບຄວາມຕ້ອງການຂອງກຸຫລາບກໍ່ທຳໃຫ້ການຈະເລີນເຕີບໂຕຊ້າ. ດັ່ງນັ້ນ, ການໃຫ້ນໍ້າກຸຫລາບຈຶ່ງສຳຄັນຢູ່ທີ່ດິນເພາະດິນຈະລະບາຍນໍ້າໄດ້ດີ ແມ່ນຂຶ້ນຢູ່ກັບຄຸນສົມບັດຂອງດິນການໃຫ້ນໍ້າ ຈຶ່ງຄວນສັງເກດດິນເປັນສ່ວນໃຫຍ່ແລ້ວຈຶ່ງກຳນົດ ເວລາໃນການໃຫ້ນໍ້າໃຫ້ພຽງພໍກັບຄວາມຕ້ອງການຂອງກຸຫລາບ.

### 6.2.2 ການຕັດແຕ່ງກິ່ງ

ເມື່ອປູກກຸຫລາບໄປເທິງແລ້ວຕົ້ນກຸຫລາບຈະໃຫ້ດອກນ້ອຍມີກ້ານຈ່ອຍບາງການຕັດກິ່ງຈະຊ່ວຍໃຫ້ກິ່ງແຕກດອກມາໃໝ່ແຂງແຮງ ແລະ ໃຫ້ດອກທີ່ມີຄຸນນະພາບດີ. ການຕັດແຕ່ງກິ່ງ ຄວນເຮັດໃນຕົ້ນລະດູຝົນ ຫຼື ຕົ້ນລະດູໜາວຖ້າຕັດແຕ່ງກິ່ງຖືກວິທີໃນ 45 ມື້ ຕໍ່ຈາກນັ້ນ ກໍ່ຈະໄດ້ດອກຊຸດໃໝ່. ການຕັດແຕ່ງກິ່ງ ຄວນພິຈາລະນາ ສິ່ງຕໍ່ໄປນີ້ :

- ຕັດກິ່ງຕາຍ, ກິ່ງທີ່ເປັນພະຍາດ, ກິ່ງນ້ອຍບາງ ແລະ ກິ່ງທີ່ຈະເລີນເຂົ້າຫາໃຈກາງຕົ້ນອອກໃຫ້ໝົດ.

- ຕັດກິ່ງແກ່ອອກ ແລະ ເລືອກເອົາກິ່ງທີ່ແຂງແຮງໃຫ້ເປັນກິ່ງໃໝ່ແທນ.

- ຕັດດ້ວຍມີດຕັດແຕ່ງກິ່ງທີ່ຄົມໂດຍຕັດອ່ຽງ 45 ອົງສາ ຕັດເທິງຕາໃນທີ່ຈະແຕກກິ່ງອອກ ຈາກຊົງພຸ່ມເພື່ອເປີດຊົງພຸ່ມໃຫ້ປອດໂປ່ງ.

### 6.2.3 ການບົວລະບັດຮັກສາ

ກໍ່ຄືການດູແລເອົາໃຈໃສ່ຕົ້ນກຸຫລາບດ້ວຍວິທີການທີ່ຖືກຕ້ອງ ເປັນຕົ້ນແມ່ນການໃຫ້ນ້ຳ ໃຫ້ຝຸ່ນພຽງພໍກັບຄວາມຕ້ອງການຂອງກຸຫລາບ ແລະ ການໃຫ້ນ້ຳຖືກວິທີດັ່ງທີ່ໄດ້ກ່າວໄວ້ພ້ອມກັນນັ້ນ ກໍ່ຕ້ອງຮູ້ວິທີການຕັດແຕ່ງກິ່ງກຸຫລາບໃຫ້ເໝາະສົມ. ນອກນັ້ນ, ສິ່ງທີ່ຈຳເປັນອີກຢ່າງໜຶ່ງ ກໍ່ຄືການປ້ອງກັນຈຳກັດພະຍາດ ແລະ ແມງໄມ້ນັ້ນເອງ.

### 6.2.4 ການພວນດິນ

ຫລັງຈາກປູກພືດຕັ້ງຕົວດີແລ້ວ ຄວນມີການພວນດິນ ເພື່ອຊ່ວຍໃຫ້ດິນໂປ່ງ ແລະ ກຳຈັດວັດຊະພືດໄປພ້ອມ. ຫາກເປັນໄປໄດ້ຫຼັງຈາກພວນດິນແລ້ວໃຫ້ໃສ່ຝຸ່ນໄປພ້ອມ ກັບການກຳຈັດວັດຊະພືດ. ນອກນີ້ ການຄຸມດິນໃຫ້ກຸຫລາບຫລັງການປູກມີປະໂຫຍດຫລາຍຢ່າງຄືວັດຖຸຄຸມດິນ ຈະຊ່ວຍໃຫ້ດິນມີຄວາມຊຸ່ມຊື່ນ ຊ່ວຍປ້ອງກັນສະປໍ ແລະ ຣາໃນດິນບໍ່ໃຫ້ຖືກໃບ ແລະ ດອກການຄຸມດິນ ເຮັດໃຫ້ວັດຊະພືດຂຶ້ນນ້ອຍ ຫລືແຕກງອກຂຶ້ນມາ ກໍ່ຈຳກັດອອກງ່າຍ ປະການສຸດທ້າຍ ຖ້າຄຸມດິນໃຫ້ກຸຫລາບແລ້ວ ບໍ່ຈຳເປັນຕ້ອງພວນດິນ.

## 6.3 ການປູກໄມ້ປະດັບ

ການປູກໄມ້ປະດັບສ່ວນໃຫຍ່ຈະນິຍົມກັນຕາມໜ້າບ້ານ ຫລືສວນສາທາລະນະຕ່າງໆ ເພື່ອເບິ່ງຄວາມງາມຂອງຮູບຊົງ ແລະ ໃບ ເປັນຕົ້ນ. ໄມ້ປະດັບມີຫລາຍຊະນິດ ນອກຈາກເປັນໄມ້ພຸ່ມ, ໄມ້ຕົ້ນແລ້ວ ກໍ່ຍັງມີບາງຊະນິດທີ່ໃຊ້ປູກເປັນພືດຄຸມດິນເບິ່ງຄວາມງາມອີກ.

### 6.3.1 ການປູກໄມ້ປະດັບເປັນກໍ ຫລືເປັນຕົ້ນ

ພວກໄມ້ປະດັບທີ່ປູກເປັນກໍ ຫລື ເປັນຕົ້ນນັ້ນ ແມ່ນອີງຕາມຄວາມເໝາະສົມຂອງພັນ ໄມ້ແຕ່ລະຊະນິດພວກໄມ້ປະດັບທີ່ມັກປູກເປັນກໍແມ່ນເພື່ອຕົບແຕ່ງສະຖານທີ່ຕ່າງໆເປັນຕົ້ນແມ່ນສວນສາທາລະນະ ຫລື ຕາມສວນໜ້າບ້ານ ພວກໄມ້ປະດັບທີ່ນິຍົມປູກເປັນກໍ ຫລືເປັນຕົ້ນໄດ້ແກ່ : ຊາເຫລືອງ (ທຽນທອງ), ທູກວາງ, ຫາງນົກຍູງ ແລະ ອື່ນໆ.

### 6.3.2 ການປູກໄມ້ປະດັບເປັນພືດຄຸມດິນ

ເຊິ່ງເປັນພັນທີ່ປູກເພື່ອຄວາມສວຍງາມແລ້ວ ຍັງໃຊ້ເປັນພືດເພື່ອປູກຄຸມດິນອີກພັນ

ໄມ້ເຫຼົ່ານີ້ໃຫ້ປະໂຫຍດຫລາຍຢ່າງ ທັງໃຫ້ຄວາມງາມ ແລະ ເປັນພືດຄຸມດິນສ່ວນຫລາຍເພິ່ນນິຍົມປູກຄຸມດິນປະດັບສະຖານທີ່ຕ່າງໆເປັນຕົ້ນແມ່ນບໍລິເວນໜ້າບ້ານ ແລະ ສວນໃນບ້ານຫລືບາງຄັ້ງອາດໃຊ້ປູກຄຸມບໍລິເວນໄມ້ຢືນຕົ້ນເພື່ອໃຫ້ເກີດຄວາມງາມໄມ້ປະເພດນີ້ການບົວລະບັດຮັກສາງ່າຍສ່ວນຫລາຍຈະຂະຫຍາຍພັນ ໂດຍໃຊ້ສິ້ນສ່ວນຕ່າງໆ ເຊັ່ນ : ເສດຖີປະສົມ. ນອກນີ້, ຍັງມີຫຍ້າບາງຊະນິດທີ່ໃຊ້ປູກຄຸມດິນໃຫ້ ມີຄວາມສວຍງາມ ເຊິ່ງມີຈຳພວກຫວ້ານຕ່າງໆ.

### 6.3.3 ການປູກໄມ້ປະດັບເປັນພຸ່ມ

ການປູກໄມ້ປະດັບເປັນພຸ່ມສ່ວນຫລາຍເພິ່ນໃຊ້ວິທີທີ່ຊ່ວຍຮັກສາຊົງພຸ່ມອາດຈະເປັນການຕັດແຕ່ງກິ່ງຕ່າງໆໃຫ້ມີຮູບຊົງທີ່ງົດງາມ ພັນໄມ້ເຫລົ່ານີ້ ຈະນິຍົມກັນປູກແຄມຖະໜົນຫົນທາງ ຫລື ຕາມເດີ່ນບ້ານອື່ນໆ ເປັນຕົ້ນ. ນອກນີ້, ກໍ່ຍັງມີການປູກຕາມສວນສາທາລະນະ ພັນໄມ້ພວກນີ້ ໄດ້ແກ່ : ດອກເຈ້ຍ, ຫູກວາງ, ຊາເຫລືອງ, ເຂັມ ແລະ ສະບາ.

### 6.3.4 ການປູກໄມ້ປະດັບເພື່ອຕົກແຕ່ງອາຄານ

ພັນໄມ້ປະດັບທີ່ນິຍົມກັນປູກຕົກແຕ່ງອາຄານຕ່າງໆສ່ວນໃຫ່ຍແລ້ວຈະເປັນພັນໄມ້ໃບ ຫລືບາງຊະນິດອາດມີດອກທີ່ບອບບາງ ສ່ວນໃຫຍ່ຈະເປັນໄມ້ປະດັບທີ່ເຕີບໂຕໄດ້ໃນທີ່ມີແສງແດດອອ່ນ ຫລືໃນທີ່ມີຄວາມຊຸ່ມສູງມີລົມສະຫງົບ ຈິ່ງສົມແກ່ການຈະນຳມາປູກໃນອາຄານໃນຮົ່ມ ເພື່ອໃຊ້ປະດັບຕົກແຕ່ງອາຄານພາຍໃນຈິ່ງຕ້ອງນຳມາປູກໃນຮົ່ມ ຫລືໃນບ້ານ ຫລືໃນເຮືອນ. ຕົ້ນໄມ້ທີ່ເຫມາະສົມກັບສີມັນໂດຍສະເພາະ ໄດ້ແກ່ : ຫນ້າງົວ, ເຟີນຮ, ບອນ, ກ້ວຍໄມ້ບາງຊະນິດ ແລະ ສາວນ້ອຍປະແປ້ງເປັນຕົ້ນ.

# ບົດທົດສະດີທີ 7
# ສັດຕູຂອງໄມ້ດອກ-ໄມ້ປະດັບ ແລະ ການປ້ອງກັນກຳຈັດ

**ຈຸດປະສົງການສອນ**

1. ອະທິບາຍກ່ຽວກັບພະຍາດ ແລະ ແມງໄມ້ຂອງໄມ້ດອກ-ໄມ້ປະດັບ
2. ອະທິບາຍວິທີປ້ອງກັນ ແລະ ກຳຈັດພະຍາດ ແລະ ແມງໄມ້ຂອງໄມ້ດອກ ໄມ້ປະດັບ

## ເນື້ອໃນ

### 7.1 ພະຍາດ ແລະ ແມງໄມ້ສັດຕູຂອງໄມ້ດອກ-ໄມ້ປະດັບ

ການປູກໄມ້ດອກໄມ້ປະດັບໃຫ້ປະສົບຜົນສຳເລັດໄດ້ຮັບ ຜົນຜະລິດທີ່ມີຄຸນນະພາບຍ່ອມຈະ ມີບັນຫາ ແລະ ອຸປະສັກຫລາຍຢ່າງ ເລີ່ມແຕ່ການປູກ, ການບົວລະບັດຮັກສາຕ່າງໆເຊັ່ນ: ການໃຫ້ນ້ຳ, ການໃສ່ຝຸ່ນ, ການຕັດແຕ່ງ ລວມທັງສັດຕູຕ່າງໆລົບກວນ ເຊັ່ນ : ພະຍາດແມງໄມ້ ລວມທັງສະພາບແວດລ້ອມທີ່ປ່ຽນແປງ. ບັນຫາທີ່ເກີດຂຶ້ນເຫລົ່ານີ້ ບາງຢ່າງສາມາດປ້ອງກັນແກ້ໄຂໄດ້ ພະຍາດແລະ ແມງໄມ້ກໍ່ເປັນບັນຫາ ແລະ ອຸປະສັກທີ່ຈະເຮັດໃຫ້ຜົນຜະລິດ ແລະ ຄຸນນະພາບຂອງໄມ້ດອກໄມ້ປະດັບຫລຸດລົງ ແຕ່ເປັນເລື່ອງທີ່ສາມາດປ້ອງກັນແກ້ໄຂໄດ້. ການປ້ອງກັນກຳຈັດບໍ່ໃຫ້ພະຍາດແມງໄມ້ລົບກວນກໍ່ເປັນວິທີທີ່ດີກ່ວາປ່ອຍໃຫ້ພືດຖືກລົບກວນກ່ອນແລ້ວຈຶ່ງກຳຈັດ. ການປ້ອງກັນເລີ່ມແຕ່ສະພາບພື້ນທີ່ປູກຈະຕ້ອງເໝາະສົມ, ການຕຽມດິນດີ, ດິນປູກລະບາຍນ້ຳໄດ້ດີ ແລະ ມີການບົວລະບັດຮັກສາພືດໃຫ້ຈະເລີນເຕີບໂຕແຂງແຮງ. ພະຍາດທີ່ພົບ ແລະ ມີບັນຫາໃນໄມ້ດອກ ໄມ້ປະດັບ ມີທັງເກີດຈາກເຊື້ອຣາ (Fungus), ເຊື້ອໄວຣັສ(Virus), ເຊື້ອແບັກທີເຣຍ (Bacteria), ຂີ້ກະເດືອນຝອຍ. ນອກຈາກນີ້, ຍັງມີພະຍາດທີ່ເກີດຈາກສະພາບແວດລ້ອມ ເຊັ່ນ : ພະຍາດຂາດອາຫານພະຍາດທີ່ເກີດຈາກເມັດຂີ້ຝຸ່ນ ຫລືຄວາມຊຸ່ມນ້ອຍ ຫລື ຫຼາຍເກີນໄປ. ອາການຂອງພະຍາດທີ່ພົບທົ່ວໆໄປ ຈະເປັນພະຍາດໃບຈຸດ, ພະຍາດເໜົ່າ, ພະຍາດຣາຂີ້ໝ້ຽງ ແລະ ພະຍາດໃບແຫ້ງ ເຫລົ່ານີ້ເປັນຕົ້ນ. ສ່ວນແມງທີ່ເປັນສັດຕູຂອງ ໄມ້ດອກ-ໄມ້ປະດັບ ມີຫລາຍຊະນິດ ເຊິ່ງຈະແຍກອອກເປັນກຸ່ມ ດັ່ງນີ້ :

1. ພວກກັດກິນ ໃບ, ຍອດອ່ອນ, ແລະ ຮາກໄດ້ແກ່ ໜອນແມງກະເບື້ອຕ່າງໆ, ດ້ວງປີກແຂງ ແລະ ຕັກແຕນເປັນຕົ້ນ.
2. ພວກດູດ ກິນນ້ຳລ້ຽງ, ຕາມສ່ວນຍອດ, ໃບ, ດອກ ແລະ ລຳຕົ້ນ ໄດ້ແກ່ ເພ້ຍຕ່າງໆ ເຊັ່ນ: ເພ້ຍໜອນ, ເພ້ຍໄຟ, ເພ້ຍຫອຍ, ເພ້ຍແປ້ງ ແລະ ໄຮແດງເປັນຕົ້ນ.
3. ພວກເຈາະລຳຕົ້ນ ເຈາະເປືອກ ໄດ້ແກ່ດ້ວງເຈາະລຳຕົ້ນ, ໜອນເຈາະ

ເປືອກແລະ ໜອນຊ້ອນໃບເປັນຕົ້ນ.

## 7.2 ການປ້ອງກັນກຳຈັດພະຍາດ ແລະ ແມງໄມ້ ຂອງໄມ້ດອກ-ໄມ້ປະດັບ

### 7.2.1 ພະຍາດໄວຣັສ (Virus)

ເກີດຈາກເຊື້ອໄວຣັສ ລັກສະນະອາການຈະປະກົດໃຫ້ເຫັນທີ່ໃບໂດຍ ໃບຈະດ່າງເຫລືອງກູດ ໃນທີ່ສຸດອາດຕາຍໄດ້ ແລະ ເຮັດໃຫ້ຜົນຜະລິດຕົກຕ່ຳ. ໂດຍທົ່ວໄປແລ້ວຈະພົບພະຍາດນີ້ບໍ່ຫລາຍ ເພາະພະຍາດນີ້ຈະລະບາດໂດຍຕິດໄປນຳເຄື່ອງມື ເຊັ່ນ : ມີດຕິດຕາ ແລະ ແຕ່ງກິ່ງ.

- ວິທີປ້ອງກັນ : ຖ້າພົບວ່າຕົ້ນດອກໄມ້ເປັນພະຍາດດັ່ງກ່າວ ໃຫ້ຂຸດຖິ້ມ ແລະ ຄວນລະມັດລະວັງ ເລື່ອງຄວາມສະອາດເຄື່ອງມືທີ່ໃຊ້ດ້ວຍ.

### 7.2.2 ພະຍາດທີ່ເກີດຈາກເຊື້ອຣາ (Fungus)

ມີຫລາຍພະຍາດ ເຊັ່ນ : ພະຍາດຣານ້ຳຄ້າງ, ພະຍາດຣາຂີ້ໝ້ຽງ, ພະຍາດໃບຈຸດສີນ້ຳຕານ, ພະຍາດໝາມດຳ, ພະຍາດຣາແປ້ງ ແລະ ພະຍາດໃບຈຸດ. ຕົວຢ່າງ : ພະຍາດຣາແປ້ງ: ເປັນພະຍາດທີ່ເກີດ ຈາກສາເຫດຈາກເຊື້ອຣາເຊັ່ນກັນ ທຳຄວາມເສຍຫາຍໃຫ້ແກ່ດອກໄມ້ທຸກຊະນິດ ເມື່ອເກີດກັບໃບອ່ອນມີການລະບາດຫລາຍໃນຊ່ວງລະດູໜາວ ຫລື ໃນບ່ອນທີ່ມີອາກາດໜາວ ດອກໄມ້ທີ່ຖືກພະຍາດນີ້ ທຳລາຍພໍຈະສັງເກດໄດ້ຄື ໃນສ່ວນຂອງໃບອ່ອນ ຈະມີຜົງສີຂາວຄືກັບຜົງແປ້ງເກາະຕິດຢູ່ເທິງດ້ານເທິງ ແລະ ດ້ານລຸ່ມຂອງໃບ ເຮັດໃຫ້ບໍລິເວນທີ່ຖືກທຳລາຍຫງິກງໍ ບໍ່ຈະເລີນເຕີບໂຕ ຖ້າຖືກທຳລາຍຫລາຍໃບຈະມີສີອອກເປັນສີມ່ວງ ສ່ວນດອກຖ້າເຊື້ອຣາເຂົ້າທຳລາຍຈະເຮັດໃຫ້ດອກບໍ່ບານຕາມປົກກະຕິ ຫລືອາດຈະບານແຕ່ບໍ່ສົມບູນແບບ.

- ວິທີການການປ້ອງກັນ : ໄລຍະທຳອິດຖ້າພົບພະຍາດນີ້ເກີດຂຶ້ນ ໃຫ້ຕັດສ່ວນທີ່ພົບໄປທຳລາຍໂດຍວິທີເຜົາໄຟ ແລະ ເຮັດຄວາມສະອາດບໍລິເວນດ້ານກົກຂອງຕົ້ນ.

## 7.3 ແມງໄມ້

### 7.3.1 ພວກດູດກິນ

ຕົວຢ່າງເພັຍອ່ອນ ເປັນແມງສັດຕູທີ່ທຳລາຍກຸຫລາບ ໂດຍດູດກິນນ້ຳລ້ຽງຈາກສ່ວນອ່ອນ ຫລື ບໍລິເວນຍອດອ່ອນທີ່ແຕກໃໝ່. ລັກສະນະອາການຂອງພືດທີ່ຖືກທຳລາຍ ຄື ດ້ານເທິງຂອງໃບມີສີເຫລືອງ ເຮັດໃຫ້ໃບລົ່ນ, ຍອດ ແລະ ໃບອ່ອນ ທີ່ແຕກອອກມາ ກໍ່ເສຍຮູບຊົງຖ້າຖືກທຳລາຍຫລາຍ ຕົ້ນພືດອາດຈະຢຸດການຈະເລີນເຕີບໂຕ.

- ວິທີປ້ອງກັນແລະກຳຈັດ : ຖ້າພົບບໍ່ຫລາຍໃຫ້ຕັດສ່ວນທີ່ຖືກເພັຍອ່ອນທຳລາຍໄປເຜົາໄຟຖິ້ມ, ໃຊ້ນ້ຳສີດແຮງໆໃຫ້ໂຕເພັຍກະເດັນຫລຸດອອກໄປຫລືອາດຈະສີດຢາ.

### 7.3.2 ພວກໜອນກິນໃບ (ໜອນຊ້ອນໃບແລະໜອນມ້ວນໃບ)

ເປັນໜອນທີ່ເກີດຈາກໄຂ່ຂອງແມງກະເບື້ອກາງຄືນ ເຊັ່ນ ມັກວາງໄຂ່ຕາມໃຕ້ໃບ ແລະ ເມື່ອ ຟັກອອກມາເປັນໂຕບົ້ງກໍ່ກັດກິນໃບທີ່ເກາະຢູ່ເປັນອາຫານ ແລະ ກະຈາຍໄປກັດກິນທີ່ໃບອື່ນໆ. ບາງຊະນິດທຳລາຍສະເພາະຜິວເນື້ອໃບເຮັດໃຫ້ໃບຊອດ, ບາງຊະນິດສ້າງເສັ້ນໄຍຢຶດໃບມ້ວນງໍ ໃນໄລຍະທີ່ໂຕໜອນເລີ່ມເຂົ້າດັກແດ້.

- ວິທີປ້ອງກັນແລະກຳຈັດ : ຈັບໂຕບົ້ງມາທຳລາຍ ຫລືໃຊ້ຢາຂ້າແມງໄມ້ສີດພົ່ນ.

## ເອກະສານອ້າງອີງ

1. ກະຊວງກະສິກຳ ແລະປ່າໄມ້. 1994. ເອກະສານປະກອບການສິດສອນ ວິຊາ ໄມ້ດອກ ໄມ້ປະດັບ. ຫລັກສູດເອກະພາບສຳລັບ 4 ໂຮງຮຽນກະສິກຳຊັ້ນກາງ ໂດຍການຊ່ວຍເຫລືອ ແລະຮ່ວມມືຈາກ ອົງການຊິດເຊ ແລະ ສະຖາບັນ ເຕັກໂນໂລຍີ ລາຊມົງຄົລ ປະເທດໄທ. ພິມທີ່ນາບົງ. 63 ນ.